ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 055 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 16/01/2012

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ແຮ່ທາດ**

**ສະບັບປັບປຸງ.**

~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 18/ສພຊ, ລົງວັນທີ 20 ທັນວາ 2011 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ແຮ່ທາດ ສະບັບປັບປຸງ;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 18/ຄປຈ, ລົງວັນທີ 03 ມັງກອນ 2012.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍ ແຮ່ທາດ ສະບັບປັບປຸງ.

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ
~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ ເລກທີ 18 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ແຮ່ທາດ ສະບັບປັບປຸງ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ

ພາຍຫຼັງທີ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນ ຂອງກົດໝາຍວ່າດ້ວຍ ແຮ່ທາດ ສະບັບປັບປຸງ ໃນວາລະກອງປະຊຸມຕອນບ່າຍຂອງວັນທີ 20 ທັນວາ 2011

### ກອງປະຊຸມໄດ້ຕົກລົງ:

**ມາດຕາ 1.** ຮັບຮອງເອົາ ກົດໝາຍວ່າດ້ວຍ ແຮ່ທາດ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີ ເປັນສ່ວນຫຼາຍ

**ມາດຕາ 2.** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 20 ທັນວາ 2011

ປະທານສະພາແຫ່ງຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------------

ສະພາແຫ່ງຊາດ

ເລກທີ 02 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 20 ທັນວາ 2011

# ກົດໝາຍ

# ວ່າດ້ວຍ ແຮ່ທາດ (ສະບັບປັບປຸງ)

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍແຮ່ທາດ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ, ການນຳໃຊ້ແຮ່ທາດ ແລະ ຊັບພະຍາກອນແຮ່ທາດ, ການກວດກາການເຄື່ອນໄຫວວຽກງານແຮ່ທາດ ແນໃສ່ເຮັດໃຫ້ການຊອກຄົ້ນ, ການສຳຫຼວດ, ການຂຸດຄົ້ນ, ການປຸງແຕ່ງແຮ່ທາດ ໃຫ້ມີປະສິດທິພາບສູງ ໂດຍຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ, ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສ້າງເງື່ອນໄຂໃຫ້ແກ່ການຂະຫຍາຍຕົວທາງດ້ານເສດຖະກິດ, ຫັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວ, ພັດທະນາເຂດແຮ່ທາດແບບຍືນຍົງ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າດີຂຶ້ນ.

**ມາດຕາ 2. ແຮ່ທາດ**

ແຮ່ທາດ ແມ່ນ ທາດທີ່ບໍ່ມີຊີວິດ ຊຶ່ງເກີດຂຶ້ນໂດຍທຳມະຊາດ, ບໍ່ສາມາດສ້າງຂຶ້ນໃໝ່ໄດ້, ມີຄຸນລັກສະນະທາງດ້ານເຄມີ ແລະ ວັດຖຸວິທະຍາ ຫຼື ກາຍພາບ ຢູ່ໃນພາວະແຂງ, ພາວະແຫຼວ ແລະ ພາວະອາຍ ເຊັ່ນ ແຮ່ຄຳ, ແຮ່ເງິນ, ແຮ່ທອງ, ແຮ່ເຫຼັກ, ແຮ່ກົ່ວ, ແກ້ວປະເສີດ, ຫີນທີ່ມີແຮ່ທາດ, ຖ່ານຫີນ, ນ້ຳມັນ ແລະ ອາຍແກັດທຳມະຊາດ, ນ້ຳແຮ່ທາດ, ນ້ຳອຸ່ນ, ນ້ຳຮ້ອນທຳມະຊາດ.

ມາດຕາ 3. **ການອະທິບາຍຄຳສັບ**

**ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:**

1. **ແຫຼ່ງແຮ່ ໝາຍເຖິງ** ບ່ອນສະສົມຂອງແຮ່ທາດທີ່ເກີດຂຶ້ນຕາມທຳມະຊາດ ໂດຍມີການຢັ້ງຢືນກ່ຽວກັບປະລິມານ ແລະ ຄຸນນະພາບຂອງແຮ່ທາດ;
2. **ເຂດບໍ່ແຮ່ ໝາຍເຖິງ** ຂອບເຂດເນື້ອທີ່ຂຸດຄົ້ນ, ເຂດໂຮງງານປຸງແຕ່ງ, ລານ ຫຼື ສາງເກັບມ້ຽນແຮ່, ອ່າງເກັບນ້ຳເສຍ, ເສັ້ນທາງເຄື່ອນຍ້າຍ, ເຂດທີ່ພັກອາໄສ, ສຳນັກງານ, ສະຖານທີ່ສ້ອມແປງ, ສາງເກັບມ້ຽນທາດລະເບີດ ແລະ ທາດເຄມີຮັບໃຊ້ການຂຸດຄົ້ນ ແລະ ການຜະລິດ;
3. **ບໍ່ແຮ່ ໝາຍເຖິງ** ເຂດທີ່ມີແຮ່ທາດ ຊຶ່ງໄດ້ຮັບການສຳຫຼວດແລ້ວ ເຊັ່ນ ບໍ່ຄຳ, ບໍ່ເງິນ, ບໍ່ທອງ, ບໍ່ກົ່ວ, ບໍ່ຖ່ານຫີນ;
4. **ແຮ່ ໝາຍເຖິງ** ແຮ່ທາດທີ່ໄດ້ຜ່ານການທຍຈ້ຳ, ການບົດ, ການລ້າງກັ່ນ, ການຄັດຈ້ອນ ລວມທັງແຮ່ທາດ ທີ່ໄດ້ຮັບການປຸງແຕ່ງແລ້ວ;
5. **ວຽກງານແຮ່ທາດ ໝາຍເຖິງ** ວຽກງານໃນຂັ້ນຕອນການຂອກຄົ້ນ, ສຳຫຼວດ ແລະ ອຸດສາຫະກຳບໍ່ແຮ່;
6. **ວຽກງານຂອກຄົ້ນ ແລະ ສຳຫຼວດ ໝາຍເຖິງ** ການດຳເນີນວຽກງານການເກັບຂໍ້ມູນທາງດ້ານທໍລະນີສາດ-ແຮ່ທາດ ເບື້ອງຕົ້ນ, ການຂອກຄົ້ນ, ການສຳຫຼວດ ໄປເຖິງວຽກງານການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ເບື້ອງຕົ້ນ;
7. **ອຸດສາຫະກຳບໍ່ແຮ່ ໝາຍເຖິງ** ການດຳເນີນທຸລະກິດບໍ່ແຮ່ ເລີ່ມແຕ່ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກລະອຽດ, ການຂຸດຄົ້ນ, ປຸງແຕ່ງ, ຫຼໍ່ຫຼອມ ແລະ ຊື້-ຂາຍແຮ່ທາດ, ການພັດທະນາຊຸມຊົນ ຈົນເຖິງການປິດບໍ່;
8. **ການພັດທະນາບໍ່ແຮ່ ໝາຍເຖິງ** ການດຳເນີນວຽກງານອຸດສາຫະກຳບໍ່ແຮ່, ການປ້ອງກັນສິ່ງແວດລ້ອມ ແລະ ການພັດທະນາຊຸມຊົນ;
9. **ຫີນທີ່ມີແຮ່ທາດ ໝາຍເຖິງ** ຫີນທີ່ບັນຈຸແຮ່ທາດໃດໜຶ່ງ;
10. **ຫາງແຮ່ ໝາຍເຖິງ** ແຮ່ທາດຈຳນວນໃດໜຶ່ງ ທີ່ຕົກເຮັ່ຍ, ເຈືອປົນກັບສິ່ງເສດເຫຼືອ ຊຶ່ງບໍ່ສາມາດເກັບກູ້ໄດ້ໝົດ ຈາກການຂຸດຄົ້ນ, ການຜະລິດ ແລະ ການລ້າງກັ່ນ;
11. **ແຮ່ຕົກຂ້ອນ ໝາຍເຖິງ** ແຮ່ທາດຜຸພັງທີ່ໄຫຼມາເຕົ້າໂຮມຢູ່ຈຸດໃດໜຶ່ງ ຕາມທຳມະຊາດ;
12. **ການພັດທະນາເຂດແຮ່ທາດແບບຍືນຍົງ ໝາຍເຖິງ** ການພັດທະນາແບບຮອບດ້ານຢູ່ພື້ນທີ່ ຫຼື ພາຍຫຼັງການຂຸດຄົ້ນແຮ່ທາດ ໂດຍມີການປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ແນໃສ່ຮັບປະກັນການມີວຽກເຮັດງານທຳ ແລະ ປັວແປງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າຢູ່ໃນພື້ນທີ່ນັ້ນໃຫ້ດີຂຶ້ນເທື່ອລະກ້າວ, ເຮັດໃຫ້ເສດຖະກິດ-ສັງຄົມ ມີປະສິດທິຜົນ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ;

13. **ກິດຈະການ ກ່ຽວກັບແຮ່ທາດ ໝາຍເຖິງ** ວຽກງານຕ່າງໆ ກ່ຽວກັບວຽກງານຊອກຄົ້ນ, ສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ;
14. **ແຮ່ທາດກຳມະລັງສີ ໝາຍເຖິງ** ທາດທີ່ສາມາດນຳໃຊ້ເຂົ້າໃນວຽກງານວິທະຍາສາດຕ່າງໆ ແຕ່ກໍມີຜົນກະທົບຕໍ່ສຸຂະພາບ, ຊີວິດຂອງຄົນ, ສັດ ແລະ ສິ່ງແວດລ້ອມ ເຊັ່ນ ຢູຣານຽມ, ໂທຣຽມ;
15. **ແຮ່ທາດສານພູ ໝາຍເຖິງ** ແຮ່ທາດອັກເຊນິກ;
16. **ເຫດສຸດວິໄສ ໝາຍເຖິງ** ເຫດການເກີດຂຶ້ນທີ່ບໍ່ສາມາດຄາດຄະເນລ່ວງໜ້າ ແລະ ຄວບຄຸມໄດ້ ເປັນຕົ້ນ ນ້ຳຖ້ວມ, ດິນເຈື່ອນ, ພະຍຸ, ຟ້າຜ່າ, ພະຍາດລະບາດ, ແຜ່ນດິນໄຫວ.

**ມາດຕາ 4. ກຳມະສິດກ່ຽວກັບແຮ່ທາດ**

ແຮ່ທາດທັງໝົດທີ່ເກີດຂຶ້ນຢູ່ເທິງໜ້າດິນ, ພື້ນດິນ ແລະ ພື້ນນ້ຳ ແມ່ນ ກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 5 (ປັບປຸງ ). ນະໂຍບາຍຂອງລັດກ່ຽວກັບແຮ່ທາດ**

ລັດ ມີນະໂຍບາຍໃຫ້ມີການເລືອກເຟັ້ນ ວິສາຫະກິດທັງພາຍໃນ ແລະ ຕ່າງປະເທດ ລົງທຶນແຕ່ລະໄລຍະ ກ່ຽວກັບແຮ່ທາດ ແລະ ອຸດສາຫະກຳບໍ່ແຮ່ ບົນພື້ນຖານຄວາມສາມາດທາງດ້ານວິຊາການ ແລະ ການເງິນ ແນໃສ່ສົ່ງເສີມການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນດ້ວຍການວາງ ຍຸດທະສາດ, ນະໂຍບາຍ, ລະບຽບການ, ມາດຕະການຕ່າງໆ ເຊັ່ນ ນະໂຍບາຍດ້ານພາສີ, ອາກອນ ຕາມລະບຽບການ, ການສະໜອງຂໍ້ມູນຂ່າວສານ ແລະ ການອຳນວຍຄວາມສະດວກອື່ນໆ.

ລັດ ສົ່ງເສີມການຊອກຄົ້ນ ແລະ ສຳຫຼວດແຮ່ທາດ ເພື່ອໃຫ້ມີຂໍ້ມູນຂ່າວສານທີ່ເປັນພື້ນຖານທາງດ້ານທໍລະນີສາດ ແລະ ແຮ່ທາດ ສາມາດຕອບສະໜອງ ໃຫ້ແກ່ການສຶກສາຄົ້ນຄວ້າທາງດ້ານວິທະຍາສາດ ກ່ຽວກັບແຮ່ທາດ ແລະ ການຫັນເປັນທຶນ.

ລັດ ສົ່ງເສີມການຂຸດຄົ້ນແຮ່ທາດ ໂດຍຕິດພັນກັບການປຸງແຕ່ງຢູ່ພາຍໃນເປັນຕົ້ນຕໍ ດ້ວຍການນຳໃຊ້ ເຕັກນິກ-ເຕັກໂນໂລຊີທີ່ກ້າວໜ້າ ແລະ ທັນສະໄໝ ເພື່ອຮັບໃຊ້ພາຍໃນ ແລະ ເປັນສິນຄ້າສົ່ງອອກ.

ລັດ ສະຫງວນ ຫຼື ຮັກສາເຂດຊັບພະຍາກອນແຮ່ທາດໃດໜຶ່ງ ຕາມແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ສຳລັບການດຳເນີນສຳຫຼວດ, ວາງແຜນ ແລະ ຂຸດຄົ້ນແຮ່ທາດ ເພື່ອຜົນປະໂຫຍດຂອງຊາດ ແລະ ຄວາມຍືນຍົງຂອງຊັບພະຍາກອນທຳມະຊາດ.

**ມາດຕາ 6. ຫຼັກການກ່ຽວກັບວຽກງານແຮ່ທາດ**

**ວຽກງານແຮ່ທາດ ໃຫ້ປະຕິບັດບົນພື້ນຖານຫຼັກການ ດັ່ງນີ້:**

1. ການສ້າງແຜນຍຸດທະສາດ ກ່ຽວກັບວຽກງານແຮ່ທາດ ຕ້ອງໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ແລະ ຄວາມສາມາດຕົວຈິງ ໃນການຄຸ້ມຄອງຂອງລັດ;
2. ການຂຸດຄົ້ນ, ນຳໃຊ້ແຮ່ທາດ ແລະ ຊັບພະຍາກອນແຮ່ທາດ ຕ້ອງໃຫ້ສົມເຫດສົມຜົນ, ມີປະສິດທິພາບ, ຮັບປະກັນການພັດທະນາເຂດແຮ່ທາດແບບຍືນຍົງ ແລະ ໃຫ້ສົມຄູ່ກັບການປົກປັກຮັກສາສິ່ງແວດລ້ອມ;
3. ວຽກງານແຮ່ທາດ ຕ້ອງຕິດພັນກັບການພັດທະນາພື້ນຖານໂຄງລ່າງ ເພື່ອຮັບໃຊ້ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ, ຊຸມຊົນ ແລະ ປົວແປງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ທັງຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
4. ການປົກປັກຮັກສາແຮ່ທາດ ແລະ ຊັບພະຍາກອນແຮ່ທາດ ຕ້ອງມີການເຂົ້າຮ່ວມຂອງປະຊາຊົນ, ຄອບຄົວ, ການຈັດຕັ້ງ, ອົງການປົກຄອງທ້ອງຖິ່ນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 7. ການປົກປ້ອງສິດ ແລະ ຜົນປະໂຫຍດກ່ຽວກັບແຮ່ທາດ**

ລັດ ປົກປ້ອງສິດ ແລະ ຜົນປະໂຫຍດສູງສຸດຂອງຊາດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ດຳເນີນທຸລະກິດ ກ່ຽວກັບແຮ່ທາດ ແລະ ປະຊາຊົນບັນດາເຜົ່າ ຕາມລະບຽບກົດໝາຍ.

**ມາດຕາ 8. ພັນທະໃນການປົກປັກຮັກສາແຮ່ທາດ**

ລັດ ວາງມາດຕະການກ່ຽວກັບການປົກປັກຮັກສາແຮ່ທາດ ແລະ ຊັບພະຍາກອນແຮ່ທາດ ໃນຂອບເຂດທົ່ວປະເທດ.

ການປົກປັກຮັກສາແຮ່ທາດ ແລະ ຊັບພະຍາກອນແຮ່ທາດ ແມ່ນ ພັນທະຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທຸກພາກສ່ວນ ຢູ່ ສປປ ລາວ.

**ມາດຕາ 9. ການຮ່ວມມືສາກົນ**

ລັດ ຊຸກຍູ້, ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແຮ່ທາດ ດ້ວຍຫຼາຍຮູບການ ເຊັ່ນ ການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກນິກ-ເຕັກໂນໂລຊີ, ການຕະຫຼາດ, ການຝຶກອົບຮົມ ແລະ ຍົກລະດັບທາງດ້ານວິຊາສະເພາະໃຫ້ພະນັກງານ, ການຍາດແຍ່ງເອົາການຊ່ວຍເຫຼືອທາງດ້ານວິຊາການ, ທຶນຮອນ ແລະ ປະຕິບັດຕາມສັນຍາ ແລະ ສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

**ມາດຕາ 10 (ປັບປຸງ). ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ ຫຼື ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນກິດຈະການ ແລະ ທຸລະກິດກ່ຽວກັບແຮ່ທາດ ຍົກເວັ້ນກິດຈະການ ກ່ຽວກັບແຮ່ທາດປະເພດນ້ຳມັນດິບ, ອາຍແກັດທຳມະຊາດ ແລະ ວັດສະດຸຮັບໃຊ້ການກໍ່ສ້າງ ເຊັ່ນ ດິນ, ຫີນ, ຫີນແຮ່, ຊາຍ ຊຶ່ງບໍ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ກົດໝາຍສະບັບນີ້.

# ພາກທີ II
# ແຮ່ທາດ
## ໝວດທີ 1
## ໝວດແຮ່ທາດ

**ມາດຕາ 11 (ປັບປຸງ). ການສຳຫຼວດທໍລະນີສາດຂັ້ນພື້ນຖານ**

ການສຳຫຼວດທໍລະນີສາດຂັ້ນພື້ນຖານ ແມ່ນ ການຢັ່ງສືບ ແລະ ເກັບກຳຂໍ້ມູນເບື້ອງຕົ້ນ ກ່ຽວກັບປາກົດການທີ່ມີແຮ່ທາດ, ການສຶກສາໂຄງສ້າງທໍລະນີສາດ, ແຜນທີ່ທໍລະນີສາດພື້ນຖານ ແລະ ປະລິມານສະສົມແຮ່ທາດ ເພື່ອເປັນບ່ອນອີງໃຫ້ແກ່ ການຈັດແບ່ງໝວດແຮ່ທາດ ແລະ ເຂດຊັບພະຍາກອນແຮ່ທາດ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ດຳເນີນການສຳຫຼວດທໍລະນີສາດຂັ້ນພື້ນຖານໃນຂອບເຂດທົ່ວປະເທດ ຕາມການມອບໝາຍຂອງລັດຖະບານ ໂດຍປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 12 (ປັບປຸງ). ການຈັດແບ່ງໝວດແຮ່ທາດ**

**ແຮ່ທາດ ໄດ້ຈັດແບ່ງອອກເປັນ ສີ່ ໝວດ ຄື:**

1. ໝວດແຮ່ທາດໂລຫະ ປະກອບດ້ວຍ ແຮ່ຄຳ, ແຮ່ເງິນ, ແຮ່ທອງ, ແຮ່ສັງກະສີ, ແຮ່ເຫຼັກ, ແຮ່ຊືນ, ແຮ່ກົ່ວ ແລະ ແຮ່ທາດອື່ນ;
2. ໝວດແຮ່ທາດອະໂລຫະ ປະກອບດ້ວຍ ເພັດ, ແກ້ວປະເສີດ, ແກ້ວມໍລະກົດ, ຫີນປູນ, ຫີນທີ່ມີແຮ່ທາດ, ຫີນກາວ, ຫີນປະດັບ ແລະ ແຮ່ທາດອື່ນ;
3. ໝວດແຮ່ທາດພະລັງງານເຊື້ອໄຟ ປະກອບດ້ວຍ ຖ່ານຫີນ, ນ້ຳມັນດິບ, ອາຍແກັດທຳມະຊາດ ແລະ ແຮ່ທາດອື່ນ;
4. ໝວດແຮ່ທາດແຫຼວ ປະກອບດ້ວຍ ແຫຼ່ງນ້ຳພື້ນດິນໃນທຸກຮູບແບບ ເຊັ່ນ ແຫຼ່ງນ້ຳຮ້ອນ, ແຫຼ່ງນ້ຳແຮ່ທາດ ແລະ ອື່ນໆ.

ໃນສີ່ໝວດແຮ່ທາດດັ່ງກ່າວ ມີແຮ່ທາດສະຫງວນ ແລະ ແຮ່ທາດຫວງຫ້າມ ຊຶ່ງລັດເປັນຜູ້ກຳນົດຕາມການສະເໜີຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

## ໝວດທີ 2
## ຊັບພະຍາກອນແຮ່ທາດ

**ມາດຕາ 13. ຊັບພະຍາກອນແຮ່ທາດ**

ຊັບພະຍາກອນແຮ່ທາດ ແມ່ນ ການສະສົມ ຫຼື ການປາກົດຕົວຂອງແຮ່ທາດຢູ່ຊັ້ນເປືອກໂລກໃນຮູບຮ່າງຕ່າງໆ ຕາມທຳມະຊາດ, ມີຄຸນລັກສະນະສະເພາະ ທີ່ສາມາດທຳການຂຸດຄົ້ນ ແລະ ສຳຫຼວດໄດ້.

**ມາດຕາ 14 (ປັບປຸງ). ເຂດຊັບພະຍາກອນແຮ່ທາດ**

**ຊັບພະຍາກອນແຮ່ທາດ ແບ່ງອອກເປັນ ສີ່ ເຂດ ດັ່ງນີ້:**

1. ເຂດອະນຸຍາດໃຫ້ດຳເນີນກິດຈະການກ່ຽວກັບແຮ່ທາດ;
2. ເຂດສະຫງວນ;
3. ເຂດຫວງຫ້າມ;
4. ເຂດມີທາດເບື່ອ.

ລັດ ເປັນຜູ້ຕົກລົງກ່ຽວກັບການກຳນົດເຂດອະນຸຍາດໃຫ້ດຳເນີນກິດຈະການ ກ່ຽວກັບແຮ່ທາດ, ເຂດສະຫງວນ, ເຂດຫວງຫ້າມ ແລະ ເຂດມີທາດເບື່ອ ລວມທັງການທົບທວນເຂດດັ່ງກ່າວ ຕາມການສະເໜີຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 15. ເຂດອະນຸຍາດໃຫ້ດຳເນີນກິດຈະການ ກ່ຽວກັບແຮ່ທາດ**

ເຂດອະນຸຍາດໃຫ້ດຳເນີນກິດຈະການກ່ຽວກັບແຮ່ທາດ ແມ່ນ ເຂດຊັບພະຍາກອນແຮ່ທາດທີ່ກຳນົດ ໃຫ້ເປັນເຂດບູລິມະສິດສຳລັບການດຳເນີນທຸລະກິດ ກ່ຽວກັບແຮ່ທາດ ຕາມເງື່ອນໄຂ ແລະ ມາດຕະຖານທີ່ໄດ້ກຳນົດໄວ້.

ໃນກໍລະນີທີ່ຫຼາຍຂະແໜງການຕ້ອງການນຳໃຊ້ເຂດດຽວກັນ ແຕ່ມີຈຸດປະສົງແຕກຕ່າງກັນນັ້ນ ລັດຖະບານເປັນຜູ້ຕົກລົງ ໂດຍອີງໃສ່ການສຶກສາສົມທຽບລະຫວ່າງຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມ ກັບຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ຄວາມສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໄລຍະຍາວ.

**ມາດຕາ 16. ເຂດສະຫງວນ**

ເຂດສະຫງວນ ແມ່ນ ເຂດຊັບພະຍາກອນແຮ່ທາດ ທີ່ຮັກສາໄວ້ເພື່ອດຳເນີນການຂຸດຄົ້ນແຮ່ທາດສະເພາະໃດໜຶ່ງ ຫຼື ຮັກສາໄວ້ເພື່ອການພັດທະນາ ແລະ ຄວາມອຸດົມສົມບູນຂອງຊັບພະຍາກອນທຳມະຊາດ ໂດຍຕິດພັນກັບການທ່ອງທ່ຽວ.

ມາດຕາ 17. **ເຂດຫວງຫ້າມ**

**ເຂດຫວງຫ້າມ ແມ່ນ ເຂດທີ່ບໍ່ອະນຸຍາດໃຫ້ດຳເນີນກິດຈະການ ກ່ຽວກັບແຮ່ທາດ ຊຶ່ງ ມີ ດັ່ງນີ້:**

1. ເຂດທີ່ມີຄວາມເປັນອັນຕະລາຍ ເຊັ່ນ ເຂດລະເບີດທີ່ບໍ່ທັນແຕກ, ເຂດທີ່ມີມົນລະພິດຢ່າງຮ້າຍແຮງ;
2. ເຂດທີ່ຢູ່ໃກ້ກັບ ຫຼື ຢູ່ໃຕ້ພື້ນສິ່ງປຸກສ້າງ ຫຼື ເຂດສາທາລະນະ ຊຶ່ງເຫັນວ່າມີຄວາມສຳຄັນຕໍ່ຜົນປະໂຫຍດຂອງຊາດ ເປັນຕົ້ນ ເຂດວັດຖຸບູຮານ, ເຂດປະຫວັດສາດ, ເຂດພື້ນຖານໂຄງລ່າງ, ເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ເຂດທີ່ບໍ່ເໝາະສົມສຳລັບການດຳເນີນກິດຈະການກ່ຽວກັບແຮ່ທາດ;
3. ເຂດປ່າສະຫງວນ, ເຂດເພື່ອອະນຸລັກຊີວະນາໆພັນ, ເຂດແຜ່ພັນຂອງສັດນ້ຳ, ສັດປ່າ ແລະ ເຂດປ່າຍອດນ້ຳ.

ມາດຕາ 18. **ເຂດມີທາດເບື່ອ**

ເຂດມີທາດເບື່ອ ແມ່ນ ເຂດຊັບພະຍາກອນແຮ່ທາດທີ່ເປັນທາດເບື່ອ ຫຼື ມີທາດເບື່ອເຈືອປົນ ທີ່ເປັນອັນຕະລາຍຕໍ່ສິ່ງທີ່ມີຊີວິດ ໃນຂອບເຂດທົ່ວປະເທດ ເຊັ່ນ ເຂດທີ່ມີແຮ່ທາດສານໜູ, ແຮ່ທາດບາຫຼອດ ແລະ ອື່ນໆ.

## ພາກທີ III
## ກິດຈະການກ່ຽວກັບແຮ່ທາດ

ມາດຕາ 19 (ປັບປຸງ). **ກິດຈະການກ່ຽວກັບແຮ່ທາດ**

**ກິດຈະການກ່ຽວກັບແຮ່ທາດ ມີ ດັ່ງນີ້:**

1. ການຊອກຄົ້ນ;
2. ການສຳຫຼວດ;
3. ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ ແລະ ລະອຽດ;
4. ການຂຸດຄົ້ນ;
5. ການປຸງແຕ່ງ;
6. ການຊື້-ຂາຍແຮ່;
7. ການເຄື່ອນຍ້າຍແຮ່ ແລະ ແຮ່ທາດ;
8. ການຟື້ນຟູເນື້ອທີ່ຂຸດຄົ້ນ ແລະ ການປິດບໍ່ແຮ່;
9. ການມອບກິດຈະການຂຸດຄົ້ນ.

ມາດຕາ 20. **ການຊອກຄົ້ນ**

ການຊອກຄົ້ນແຮ່ທາດ ແມ່ນ ການສຶກສາເອກະສານຂໍ້ມູນ ແລະ ການດຳເນີນວຽກງານຢູ່ພາກສະໜາມ ກ່ຽວກັບສະພາບທໍລະນີສາດ ແລະ ປາກົດການທີ່ມີແຮ່ທາດ ລວມທັງການຕີລາຄາຄຸນລັກສະນະຂອງແຮ່ທາດ ແນໃສ່ການກຳນົດເຂດທີ່ມີຄວາມເປັນໄປໄດ້ ເພື່ອກ້າວສູ່ການສຳຫຼວດ.

ມາດຕາ 21. **ການສຳຫຼວດ**

ການສຳຫຼວດແຮ່ທາດ ແມ່ນ ການສຶກສາໂຄງສ້າງທາງດ້ານທໍລະນີສາດ ແລະ ແຫຼ່ງແຮ່ທາດ ໃນຂອບເຂດເນື້ອທີ່ທີ່ໄດ້ກຳນົດໃຫ້ສຳຫຼວດ ຊຶ່ງປະກອບດ້ວຍວຽກງານທໍລະນີສາດ, ທໍລະນີວັດຖຸ, ຂີ-ເຈາະ, ເຈາະອຸມົງ, ຂຸດຂຸມຄອງ, ຂຸດສ້າງ, ເກັບຕົວຢ່າງ, ວິເຄາະວິໄຈ ແລະ ອື່ນໆ ເພື່ອໃຫ້ຮູ້ປະລິມານສະສົມ ແລະ ຄຸນນະພາບຂອງແຫຼ່ງແຮ່ທາດ ແລ້ວກ້າວໄປສູ່ການປະເມີນຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ ແລະ ເງື່ອນໄຂ ທາງດ້ານເຕັກນິກຂອງການຂຸດຄົ້ນ.

ມາດຕາ 22 (ປັບປຸງ). **ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ ແລະ ລະອຽດ**

ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ ມີອາຍຸ ໜຶ່ງ ປີ ແລະ ສາມາດຕໍ່ໄດ້ ໜຶ່ງ ເທື່ອ ບໍ່ເກີນ ໜຶ່ງ ປີ ຕາມການພິຈາລະນາຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກລະອຽດ ແມ່ນ ການກວດກາບົດວິພາກເສດຖະກິດ-ເຕັກນິກລະອຽດ, ເອກະສານຢັ້ງຢືນການສະໜອງທຶນຂອງສະຖາບັນການເງິນ, ໃບ ຢັ້ງຢືນສິ່ງແວດລ້ອມ, ເອກະສານຢັ້ງຢືນການນຳໃຊ້ເນື້ອທີ່ດິນ, ປ່າໄມ້, ນ້ຳ, ວັດສະດຸຕ່າງໆ ໃນເຂດພັດທະນາບໍ່ແຮ່ ໂດຍກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອເຂົ້າສູ່ການເຈລະຈາສັນຍາວ່າດ້ວຍການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ.

ກຳນົດເວລາ ແລະ ຂັ້ນຕອນລະອຽດ ກ່ຽວກັບການກວດກາບັນດາເອກະສານ ທີ່ກ່າວມາຂ້າງເທິງນັ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

ມາດຕາ 23 (ປັບປຸງ). **ການຂຸດຄົ້ນ**

ການຂຸດຄົ້ນແຮ່ທາດ ແມ່ນ ການເອົາແຮ່ທາດຕາມໜ້າດິນ ແລະ ຢູ່ພື້ນດິນ ດ້ວຍວິທີການບຸກເບີກ, ຂຸດຄົ້ນ, ຂີ-ເຈາະ, ດູດ, ລະເບີດ, ຄັດຈ້ອນ ຄຸນນະພາບແຮ່ທາດ, ຍົກຍ້າຍ ແລະ ເກັບມ້ຽນແຮ່ທາດ.

ການຂຸດຄົ້ນ ແບ່ງອອກເປັນ ສອງ ໜ້າວຽກ ຄື ວຽກງານການກໍ່ສ້າງ ແລະ ວຽກງານການຂຸດຄົ້ນແຮ່ທາດ.

ໃນການກໍ່ສ້າງ ແລະ ຂຸດຄົ້ນແຮ່ທາດ ຕ້ອງນຳໃຊ້ເຕັກນິກ-ເຕັກໂນໂລຊີທີ່ໄດ້ມາດຕະຖານ, ທັນສະໄໝ ແລະ ມີປະສິດທິພາບສູງ, ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

**ມາດຕາ 24. ການປຸງແຕ່ງ**

ການປຸງແຕ່ງແຮ່ທາດ ແມ່ນ ວິທີການ ຫຼື ຂັ້ນຕອນຂອງການຜະລິດ ເພື່ອຍົກຄຸນນະພາບແຮ່ທາດ ແລະ ສ້າງມູນຄ່າທາງດ້ານເສດຖະກິດ ດ້ວຍການຂົບ, ການບົດ, ການແຍກ, ການກັ່ນຕອງ, ການຫຼໍ່ຫຼອມ, ການປຸງນຮູບ, ການເຈັຍລະໄນ ແລະ ການປຸງແຕ່ງແຮ່ທາດເພີ່ມເຕີມ ໃຫ້ກາຍເປັນຜະລິດຕະພັນສິນຄ້າ.

**ມາດຕາ 25. ການຊື້-ຂາຍແຮ່**

ການຊື້-ຂາຍແຮ່ ແມ່ນ ການຕົກລົງລະຫວ່າງຜູ້ລົງທຶນກ່ຽວກັບແຮ່ທາດກັບບຸກຄົນ ຫຼື ນິຕິບຸກຄົນ ພາຍໃນ ຫຼື ຕ່າງປະເທດ ທີ່ຕ້ອງການນຳໄປປຸງແຕ່ງເປັນຜະລິດຕະພັນ ຫຼື ສິນຄ້າໃດໜຶ່ງ.

ຮູບການ ແລະ ວິທີການຊື້-ຂາຍແຮ່ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ.

**ມາດຕາ 26. ການເຄື່ອນຍ້າຍແຮ່ ແລະ ແຮ່ທາດ**

ການເຄື່ອນຍ້າຍແຮ່ ແລະ ແຮ່ທາດ ແມ່ນ ການຂົນສົ່ງແຮ່ ແລະ ແຮ່ທາດຈາກຈຸດໜຶ່ງໄປຫາອີກຈຸດໜຶ່ງ ຢູ່ພາຍໃນປະເທດ ຫຼື ຈາກພາຍໃນໄປຕ່າງປະເທດ.

ການເຄື່ອນຍ້າຍແຮ່ ແລະ ແຮ່ທາດ ຕ້ອງມີເອກະສານເຄື່ອນຍ້າຍ, ກຳນົດເສັ້ນທາງເຄື່ອນຍ້າຍ, ຈ່າຍຄ່າພັນທະ, ມີການຕິດຊັ່ງນ້ຳໜັກ ແລະ ເກັບຕົວຢ່າງໄວ້ ເພື່ອກວດກາ ແລະ ຕ້ອງປະຕິບັດຕາມລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 27. ການຟື້ນຟູເນື້ອທີ່ຂຸດຄົ້ນ ແລະ ການປິດບໍ່ແຮ່**

ພາຍຫຼັງສຳເລັດການຂຸດຄົ້ນຢູ່ບ່ອນໃດໜຶ່ງແລ້ວ ຜູ້ລົງທຶນຕ້ອງໄດ້ປົວແປງ ແລະ ຟື້ນຟູເນື້ອທີ່ຂຸດຄົ້ນຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ຢູ່ໃນແຜນຄຸ້ມຄອງສິ່ງແວດລ້ອມ ເພື່ອໃຫ້ສາມາດນຳໃຊ້ເຂົ້າໃນເປົ້າໝາຍ ຫຼື ກິດຈະການໃດໜຶ່ງ.

ເມື່ອສິ້ນສຸດການດຳເນີນກິດຈະການບໍ່ແຮ່ແລ້ວ ຕ້ອງໄດ້ປິດບໍ່ແຮ່ ພ້ອມທັງມອບສິ່ງເນື້ອທີ່ ທີ່ໄດ້ສຳປະທານ ລວມທັງກິດຈະການຂຸດຄົ້ນທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງກົດໝາຍສະບັບນີ້.

**ມາດຕາ 28. ການມອບກິດຈະການຂຸດຄົ້ນ**

ພາຍຫຼັງສຳເລັດການຟື້ນຟູເນື້ອທີ່ຂຸດຄົ້ນ ແລະ ການປິດບໍ່ແຮ່ແລ້ວ ຜູ້ລົງທຶນກ່ຽວກັບບໍ່ແຮ່ ຕ້ອງມອບກິດຈະການຂຸດຄົ້ນ ເປັນຕົ້ນ ຂໍ້ມູນຂ່າວສານກ່ຽວກັບທໍລະນີສາດ ແລະ ແຫຼ່ງແຮ່, ອຸປະກອນ, ພາຫະນະກົນຈັກ ແລະ ຊັບສິນບັດອື່ນ ໃຫ້ແກ່ລັດ ຕາມລະບຽບການ ໂດຍບໍ່ມີການໃຊ້ແທນແຕ່ຢ່າງໃດ.

ໃນກໍລະນີທີ່ລັດບໍ່ຮັບເອົາຊັບສິນບັດດັ່ງກ່າວ ຜູ້ລົງທຶນ ຕ້ອງໄດ້ເຄື່ອນຍ້າຍ ຫຼື ຮື້ຖອນ ດ້ວຍຄວາມຮັບຜິດຊອບຂອງຕົນເອງ.

# ພາກທີ IV
# ທຸລະກິດກ່ຽວກັບແຮ່ທາດ

**ມາດຕາ 29. ຮູບການລົງທຶນກ່ຽວກັບທຸລະກິດແຮ່ທາດ**

ຮູບການລົງທຶນກ່ຽວກັບທຸລະກິດແຮ່ທາດ ປະກອບດ້ວຍ ວິສາຫະກິດສ່ວນບຸກຄົນ, ວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍວ່າດ້ວຍວິສາຫະກິດ.

**ມາດຕາ 30 (ປັບປຸງ). ການເກັບກຳຂໍ້ມູນເບື້ອງຕົ້ນ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບແຮ່ທາດ ຕ້ອງຂໍອະນຸຍາດເກັບກຳຂໍ້ມູນເບື້ອງຕົ້ນສະເພາະແຮ່ທາດໃດໜຶ່ງຈາກຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ການເກັບກຳຂໍ້ມູນເບື້ອງຕົ້ນນັ້ນ ຈະດຳເນີນຢູ່ຫ້ອງການ ແລະ ຢູ່ພາກສະໜາມ ເພື່ອສຶກສາບ່ອນປາກົດການທີ່ມີແຮ່ທາດ, ສະພາບແວດລ້ອມ ແລະ ເກັບຕົວຢ່າງເທິງໜ້າດິນມາວິໄຈ.

**ມາດຕາ 31 (ປັບປຸງ). ການຂໍ ແລະ ຕໍ່ ອະນຸຍາດລົງທຶນ**

ພາຍຫຼັງເກັບກຳຂໍ້ມູນເບື້ອງຕົ້ນແລ້ວ ຖ້າຫາກເຫັນວ່າມີຂໍ້ມູນພຽງພໍ ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງລົງທຶນໃນກິດຈະການ ກ່ຽວກັບແຮ່ທາດ ຕ້ອງຍື່ນຄຳຮ້ອງຕໍ່ຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ.

**ຜູ້ລົງທຶນ ມີຈຸດປະສົງຂໍຕໍ່ ອະນຸຍາດລົງທຶນ ຕ້ອງປະຕິບັດຕາມເງື່ອນໄຂຕົ້ນຕໍ ດັ່ງນີ້:**

1. ການຂໍຕໍ່ອະນຸຍາດລົງທຶນ ຕ້ອງສະເໜີລ່ວງໜ້າ ເກົ້າສິບ ວັນ ກ່ອນວັນໝົດອາຍຸສັນຍາ;
2. ບໍລິສັດ ໄດ້ປະຕິບັດພັນທະທາງດ້ານການເງິນ, ພັນທະຕໍ່ທ້ອງຖິ່ນ ແລະ ພັນທະອື່ນ ຄົບຖ້ວນ ແລະ ຖືກຕ້ອງຕາມກົດໝາຍ ແລະ ສັນຍາ ທີ່ໄດ້ເຊັນກັບລັດຖະບານ;
3. ການຈັດຕັ້ງປະຕິບັດສັນຍາ ດຳເນີນໄປປົກກະຕິ ແລະ ມີປະສິດທິຜົນ ໂດຍມີການຢັ້ງຢືນການປະເມີນ ຈາກຂະແໜງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ທີ່ໂຄງການຕັ້ງຢູ່;
4. ແຜນການສືບຕໍ່ໂຄງການ ຕ້ອງໄດ້ຖືກຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ.

ຖ້າບໍ່ມີການສະເໜີຂໍຕໍ່ອາຍຸ ຖືວ່າການອະນຸຍາດລົງທຶນ ໝົດຄວາມສັກສິດໂດຍອັດຕະໂນມັດ ແລະ ລັດຈະບໍ່ທົດແທນຄືນຄ່າເສຍຫາຍ ແລະ ຄ່າໃຊ້ຈ່າຍຕ່າງໆ ແຕ່ຢ່າງໃດ.

**ມາດຕາ 32 (ປັບປຸງ). ຂະໜາດຂອງແຫລ່ງແຮ່**

ຂະໜາດຂອງແຫລ່ງແຮ່ ແບ່ງອອກເປັນ ສາມ ຂະໜາດ ຄື:

1. ຂະໜາດໃຫຍ່;
2. ຂະໜາດກາງ;
3. ຂະໜາດນ້ອຍ.

ລັດຖະບານ ເປັນຜູ້ກຳນົດຂະໜາດຂອງແຫຼ່ງແຮ່ ບົນພື້ນຖານປະລິມານສະສົມ ແລະ ປະເພດຂອງແຮ່ທາດ ຕາມການສະເໜີຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 33. ປະເພດທຸລະກິດກ່ຽວກັບແຮ່ທາດ**

ທຸລະກິດກ່ຽວກັບແຮ່ທາດ ປະກອບດ້ວຍ ສາມ ປະເພດ ຄື:

1. ທຸລະກິດກ່ຽວກັບການສຶກສາຂໍ້ມູນທາງດ້ານທໍລະນີສາດ ແລະ ແຫຼ່ງແຮ່;
2. ທຸລະກິດກ່ຽວກັບບໍ່ແຮ່;
3. ທຸລະກິດກ່ຽວກັບແຮ່ທາດສະເພາະ.

## ໝວດທີ 1
## ທຸລະກິດກ່ຽວກັບການສຶກສາຂໍ້ມູນທາງດ້ານທໍລະນີສາດ ແລະ ແຫຼ່ງແຮ່

**ມາດຕາ 34 (ປັບປຸງ). ວຽກງານທຸລະກິດ ກ່ຽວກັບການສຶກສາຂໍ້ມູນທາງດ້ານທໍລະນີສາດ ແລະ ແຫຼ່ງແຮ່**

ວຽກງານທຸລະກິດກ່ຽວກັບການສຶກສາຂໍ້ມູນທາງດ້ານທໍລະນີສາດ ແລະ ແຫຼ່ງແຮ່ ປະກອບດ້ວຍ ການຊອກຄົ້ນ, ການສຳຫຼວດແຮ່ທາດ ແລະ ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ.

ຂັ້ນຕອນການຊອກຄົ້ນ, ການສຳຫຼວດແຮ່ທາດ ແລະ ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ ແມ່ນ ຢູ່ພາຍໃຕ້ການຄຸ້ມຄອງ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 35 (ປັບປຸງ). ເງື່ອນໄຂຂອງຜູ້ລົງທຶນ ກ່ຽວກັບການຊອກຄົ້ນ ແລະ ການສຳຫຼວດແຮ່ທາດ**

ເງື່ອນໄຂພື້ນຖານຂອງຜູ້ລົງທຶນ ກ່ຽວກັບການຊອກຄົ້ນ ແລະ ການສຳຫຼວດແຮ່ທາດ ມີ ດັ່ງນີ້:

1. ຕ້ອງເປັນວິສາຫະກິດ ຫຼື ບໍລິສັດ ທີ່ໄດ້ຮັບການສ້າງຕັ້ງ ແລະ ຈົດທະບຽນດຳເນີນທຸລະກິດກ່ຽວກັບແຮ່ທາດ ຢ່າງຖືກຕ້ອງ;
2. ມີຖານະທາງດ້ານການເງິນທີ່ໝັ້ນຄົງ, ສາມາດມີແຫຼ່ງທຶນອື່ນ ພຽງພໍ ແລະ ມີຫຼັກຊັບຄ້ຳປະກັນ ຕາມລະບຽບການ;

3. ມີປະຫວັດຄວາມເປັນມາກ່ຽວກັບການດຳເນີນທຸລະກິດທີ່ດີ ແລະ ໜ້າເຊື່ອຖື;
4. ມີວິຊາການທາງດ້ານເຕັກນິກ ແລະ ປະສົບການ ກ່ຽວກັບການຂຸດຄົ້ນ ແລະ ການສຳຫຼວດແຮ່ທາດ.

ນອກຈາກນີ້ ຜູ້ລົງທຶນຍັງຕ້ອງກຳນົດເນື້ອທີ່ຂໍອະນຸຍາດ, ແຜນການຂຸດຄົ້ນ ແລະ ສຳຫຼວດແຮ່ ທາດ, ຄ່າໃຊ້ຈ່າຍຕ່ຳສຸດ, ບົດລາຍງານການສຶກສາຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມເບື້ອງຕົ້ນ.

ສຳລັບຜູ້ລົງທຶນກ່ຽວກັບການສຳຫຼວດແຮ່ທາດ ຍັງຕ້ອງມີບົດລາຍງານຜົນການຂຸດຄົ້ນແຮ່ທາດ ໃນເຂດທີ່ຂໍສຳຫຼວດແຮ່ທາດຕື່ມອີກ.

ໃນໄລຍະການດຳເນີນກິດຈະການ ກ່ຽວກັບການຂຸດຄົ້ນ ບໍ່ອະນຸຍາດໃຫ້ມີການຮ່ວມທຶນ, ໂອນ, ຊື້-ຂາຍ ສິດສຳປະທານຂຸດຄົ້ນ, ສຳລັບກິດຈະການກ່ຽວກັບການສຳຫຼວດ ຜູ້ໄດ້ຮັບອະນຸຍາດສາມາດຊອກຫາຜູ້ລົງທຶນອື່ນມາຮ່ວມລົງທຶນໄດ້ ແຕ່ຕ້ອງໄດ້ຮັບການເຫັນດີຈາກລັດຖະບານ.

**ມາດຕາ 36 (ປັບປຸງ). ກຳນົດເວລາພິຈາລະນາຄຳຮ້ອງ ແລະ ອາຍຸການສຳປະທານກ່ຽວກັບການຂຸດຄົ້ນ ແລະ ການສຳຫຼວດແຮ່ທາດ**

ຄຳຮ້ອງຂໍອະນຸຍາດຂຸດຄົ້ນ ຫຼື ສຳຫຼວດແຮ່ທາດ ຕ້ອງໄດ້ຮັບການພິຈາລະນາ ພາຍໃນກຳນົດເວລາ ເກົ້າສິບ ວັນ ນັບແຕ່ວັນໄດ້ຮັບເອກະສານຄົບຖ້ວນເປັນຕົ້ນໄປ. ຜົນຂອງການພິຈາລະນາຄຳຮ້ອງຂໍອະນຸຍາດຕ້ອງແຈ້ງໃຫ້ຜູ້ກ່ຽວຂ້ອງຊາບຢ່າງເປັນລາຍລັກອັກສອນ.

ອາຍຸການສຳປະທານ ກ່ຽວກັບການຂຸດຄົ້ນແຮ່ທາດ ບໍ່ໃຫ້ເກີນ ສອງ ປີ ນັບແຕ່ວັນເຊັນສັນຍາເປັນຕົ້ນໄປ ແລະ ສາມາດຕໍ່ໄດ້ອີກ ໜຶ່ງ ປີ.

ອາຍຸການສຳປະທານ ກ່ຽວກັບການສຳຫຼວດແຮ່ທາດ ບໍ່ໃຫ້ເກີນ ສາມ ປີ ນັບແຕ່ວັນເຊັນສັນຍາເປັນຕົ້ນໄປ ແລະ ສາມາດຕໍ່ໄດ້ ແຕ່ບໍ່ໃຫ້ເກີນ ສອງ ປີ.

ສຳລັບເງື່ອນໄຂໃນການຕໍ່ອາຍຸການສຳປະທານ ກ່ຽວກັບການຂຸດຄົ້ນ ແລະ ການສຳຫຼວດແຮ່ທາດ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ສັນຍາ ແລະ ໃບອະນຸຍາດທີ່ກ່ຽວຂ້ອງ ເປັນຕົ້ນ ໃບອະນຸຍາດລົງທຶນ, ໃບທະບຽນວິສາຫະກິດ, ໃບທະບຽນອາກອນຍັງມີຜົນສັກສິດ;
2. ການຕໍ່ໃບອະນຸຍາດ ຕ້ອງສະເໜີລ່ວງໜ້າ ສາມ ເດືອນ ກ່ອນວັນໝົດອາຍຸ;
3. ບໍລິສັດ ໄດ້ປະຕິບັດພັນທະທາງດ້ານການເງິນ, ພັນທະຕໍ່ທ້ອງຖິ່ນ ແລະ ພັນທະອື່ນຄົບຖ້ວນ ແລະ ຖືກຕ້ອງຕາມກົດໝາຍ ແລະ ສັນຍາ ທີ່ໄດ້ເຊັນກັບລັດຖະບານ;
4. ບົດລາຍງານຜົນການຂຸດຄົ້ນ ຫຼື ສຳຫຼວດ ທົ່ວເຂດສຳປະທານ ຕ້ອງສຳເລັດຢ່າງໜ້ອຍ ຫົກສິບ ສ່ວນຮ້ອຍ ຂອງແຜນການທີ່ຖືກຮັບຮອງ;
5. ແຜນການສືບຕໍ່ການຂຸດຄົ້ນ ຫຼື ສຳຫຼວດ ຕ້ອງໄດ້ຖືກຮັບຮອງຈາກ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ຖ້າບໍ່ມີການສະເໜີຕໍ່ ຖືວ່າ ໃບອະນຸຍາດໝົດຄວາມສັກສິດ ໂດຍອັດຕະໂນມັດ. ການສະເໜີຜ່ານບົດລາຍງານ ຈະບໍ່ຖືກພິຈາລະນາໃຫ້ຈັດຕັ້ງປະຕິບັດ ແລະ ລັດຈະບໍ່ທົດແທນຄືນຄ່າເສັຍຫາຍ ແລະ ຄ່າໃຊ້ຈ່າຍຕ່າງໆ ແຕ່ຢ່າງໃດ.

**ມາດຕາ 37 (ປັບປຸງ). ເນື້ອທີ່ອະນຸຍາດໃຫ້ຊອກຄົ້ນ ແລະ ສຳຫຼວດແຮ່ທາດ**

ວິສາຫະກິດ ຫຼື ບໍລິສັດໜຶ່ງ ສາມາດດຳເນີນການຊອກຄົ້ນແຮ່ທາດໄດ້ ໜຶ່ງຕອນ ຊຶ່ງເນື້ອທີ່ບໍ່ໃຫ້ເກີນ ສາມຮ້ອຍ ກິໂລຕາແມັດ ແລະ ບໍ່ອະນຸຍາດໃຫ້ຂະຫຍາຍເນື້ອທີ່ຕື່ມ. ສ່ວນເນື້ອທີ່ທີ່ອະນຸຍາດໃຫ້ທຳການສຳຫຼວດແຮ່ທາດນັ້ນ ໃຫ້ອີງຕາມຜົນຂອງການຊອກຄົ້ນແຮ່ທາດທີ່ໄດ້ດຳເນີນມາແລ້ວ.

ສຳລັບເນື້ອທີ່ ທີ່ໄດ້ຜ່ານການຊອກຄົ້ນແຮ່ທາດ ແລະ ມີຂໍ້ມູນທາງດ້ານທໍລະນີສາດມາແລ້ວນັ້ນ ວິສາຫະກິດ ຫຼື ບໍລິສັດໃດໜຶ່ງ ສາມາດດຳເນີນການສຳຫຼວດແຮ່ທາດໂດຍກົງກໍໄດ້ ແຕ່ເນື້ອທີ່ບໍ່ໃຫ້ເກີນ ສາມຮ້ອຍ ກິໂລຕາແມັດ.

ສ່ວນເງື່ອນໄຂ, ມາດຕະຖານ ແລະ ລະບົບຈັດສັນເນື້ອທີ່ອະນຸຍາດໃຫ້ຊອກຄົ້ນ ແລະ ສຳຫຼວດແຮ່ທາດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 38 (ປັບປຸງ). ການສົ່ງຄືນເນື້ອທີ່ຊອກຄົ້ນ ແລະ ສຳຫຼວດແຮ່ທາດ**

ພາຍຫຼັງທີ່ສຳເລັດການຊອກຄົ້ນ ແລະ ການສຳຫຼວດແຮ່ທາດແລ້ວ ຜູ້ລົງທຶນຕ້ອງສົ່ງເນື້ອທີ່ສຳປະທານ ທີ່ບໍ່ເປັນເສດຖະກິດຄືນໃຫ້ລັດຖະບານ ພ້ອມດ້ວຍຂໍ້ມູນທາງດ້ານທໍລະນີສາດ ແລະ ແຫຼ່ງແຮ່.

**ການສົ່ງຄືນເນື້ອທີ່ຊອກຄົ້ນ ແລະ ສຳຫຼວດແຮ່ທາດ ມີກໍລະນີ ດັ່ງນີ້:**

1. ຖືກຖອນອະນຸຍາດຍ້ອນການລະເມີດສັນຍາ ຫຼື ລະບຽບກົດໝາຍຢ່າງຮ້າຍແຮງ;
2. ໝົດອາຍຸການອະນຸຍາດຊອກຄົ້ນ ແລະ ສຳຫຼວດແຮ່ທາດ;
3. ບໍ່ຕ້ອງການນຳໃຊ້ເນື້ອທີ່ຊອກຄົ້ນ ແລະ ສຳຫຼວດແຮ່ທາດຕໍ່ໄປ;
4. ມີຜົນກະທົບຢ່າງຮ້າຍແຮງຕໍ່ສະພາບແວດລ້ອມ ຫຼື ຜົນປະໂຫຍດຂອງສັງຄົມ.

ການສົ່ງຄືນເນື້ອທີ່ຊອກຄົ້ນ ແລະ ສຳຫຼວດແຮ່ທາດ ຈະບໍ່ໄດ້ຮັບການທົດແທນຄ່າເສັຍຫາຍ, ຄ່າໃຊ້ຈ່າຍຕ່າງໆ ແຕ່ຢ່າງໃດ ແລະ ບໍ່ໄດ້ຮັບການທົດແທນເນື້ອທີ່ໃໝ່.

**ມາດຕາ 39 (ປັບປຸງ). ການສົ່ງຕົວຢ່າງແຮ່ທາດໄປວິໄຈ**

ຜູ້ລົງທຶນຊອກຄົ້ນ ແລະ ສຳຫຼວດແຮ່ທາດ ທີ່ມີຈຸດປະສົງ ສົ່ງຕົວຢ່າງແຮ່ທາດໄປວິໄຈຢູ່ພາຍໃນ ຫຼື ຕ່າງປະເທດນັ້ນ ຕ້ອງໄດ້ຮັບການອະນຸຍາດຈາກ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ຜູ້ລົງທຶນ ຕ້ອງແບ່ງສ່ວນຕົວຢ່າງແຮ່ທາດທີ່ຈະນຳໄປວິໄຈນັ້ນ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອເກັບຮັກສາໄວ້ວິໄຈສົມທຽບຂໍ້ມູນ. ພາຍຫຼັງສຳເລັດການວິໄຈແຮ່ທາດແລ້ວ

ຜູ້ລົງທຶນ ຕ້ອງສົ່ງບົດສະຫຼຸບຜົນຂອງການວິໄຈນັ້ນ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອສັງລວມ ແລະ ກວດກາ.

ສຳລັບ ຈຳນວນ, ບໍລິມາດ ແລະ ນ້ຳໜັກ ຂອງການສົ່ງຕົວຢ່າງໄປວິໄຈ ນັ້ນ ໄດ້ກຳນົດໄວ້ໃນແຜນການຂຸດຄົ້ນ ແລະ ສຳຫຼວດ ທີ່ໄດ້ຖືກຮັບຮອງ ແລະ ລະບຽບການສະເພາະ.

## ໝວດທີ 2
## ທຸລະກິດກ່ຽວກັບບໍ່ແຮ່

### ມາດຕາ 40. ທຸລະກິດກ່ຽວກັບບໍ່ແຮ່

ທຸລະກິດກ່ຽວກັບບໍ່ແຮ່ ປະກອບດ້ວຍບັນດາກິດຈະການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງກົດໝາຍສະບັບນີ້ ເວັ້ນເສຍແຕ່ ກິດຈະການການຂຸດຄົ້ນ, ການສຳຫຼວດ ແລະ ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ.

ພາຍຫຼັງສິ້ນສຸດການຂຸດຄົ້ນ ແລະ ການສຳຫຼວດແຮ່ທາດ ຕາມການອະນຸຍາດໃຫ້ສຳປະທານແລ້ວ ຖ້າຫາກຜູ້ລົງທຶນມີຈຸດປະສົງດຳເນີນທຸລະກິດກ່ຽວກັບບໍ່ແຮ່ ກໍຕ້ອງສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກລະອຽດ, ຄິດໄລ່ປະສິດທິຜົນທາງດ້ານເສດຖະກິດ, ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ເພື່ອຂໍອະນຸຍາດສຳປະທານຂຸດຄົ້ນຈາກລັດຖະບານ ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ. ສຳລັບການຂຸດຄົ້ນຂະໜາດໃຫຍ່ ແມ່ນສະພາແຫ່ງຊາດເປັນຜູ້ພິຈາລະນາ ຕາມການສະເໜີຂອງລັດຖະບານ.

ຖ້າຜູ້ລົງທຶນ ບໍ່ສາມາດກ້າວເຂົ້າສູ່ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກລະອຽດ ຍ້ອນໄດ້ຮັບຜົນກະທົບທາງດ້ານລາຄາຂອງແຮ່ທາດ ກໍສາມາດຈອງເນື້ອທີ່ໄວ້ ພາຍໃນກຳນົດ ສອງປີ ຫຼື ໃນກໍລະນີ ຜູ້ລົງທຶນບໍ່ຕ້ອງການດຳເນີນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກລະອຽດນັ້ນ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ລັດຖະບານ ພາຍໃນກຳນົດ ສາມສິບ ວັນ ນັບແຕ່ວັນສຳເລັດການສຳຫຼວດແຮ່ທາດເປັນຕົ້ນໄປ ພ້ອມທັງມອບຂໍ້ມູນທີ່ຕົນໄດ້ຂຸດຄົ້ນ ແລະ ສຳຫຼວດແລ້ວນັ້ນ ໂດຍບໍ່ໄດ້ຮັບຄ່າທົດແທນ ແຕ່ຢ່າງໃດ.

### ມາດຕາ 41 (ປັບປຸງ). ເງື່ອນໄຂຂອງຜູ້ລົງທຶນກ່ຽວກັບບໍ່ແຮ່

ຜູ້ລົງທຶນກ່ຽວກັບບໍ່ແຮ່ ນອກຈາກຈະມີເງື່ອນໄຂພື້ນຖານ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 2 ແລະ 3 ຂອງ ມາດຕາ 35 ຂອງກົດໝາຍສະບັບນີ້ແລ້ວ ກໍຍັງຕ້ອງມີວິຊາການທາງດ້ານເຕັກນິກ ແລະ ປະສົບການກ່ຽວກັບການຂຸດຄົ້ນອີກ.

**ນອກຈາກນີ້ ຜູ້ລົງທຶນ ຍັງຕ້ອງມີ:**

1. ຂໍ້ມູນກ່ຽວກັບຜົນຂອງການຂຸດຄົ້ນ, ການສຳຫຼວດ ແລະ ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ ໂດຍສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້;
2. ແຜນການຂຸດຄົ້ນ, ແຜນການປຸງແຕ່ງ ແລະ ບົດວິພາກເສດຖະກິດ-ເຕັກນິກລະອຽດ ທີ່ມີປະສິດທິຜົນໂດຍຖືກຮັບຮອງເອົາຈາກກະຊວງພະລັງງານ ແລະ ບໍ່ແຮ່ ໂດຍສອດຄ່ອງຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 22 ຂອງກົດໝາຍສະບັບນີ້.

## ມາດຕາ 42. ການຮັບຮອງບົດລາຍງານຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ເບື້ອງຕົ້ນ ແລະ ລະອຽດ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ພິຈາລະນາຮັບຮອງບົດລາຍງານຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ ຢ່າງຊ້າບໍ່ໃຫ້ເກີນ ໜຶ່ງຮ້ອຍຊາວ ວັນ ນັບແຕ່ວັນໄດ້ຮັບບົດລາຍງານນັ້ນເປັນຕົ້ນໄປ.

ໃນກໍລະນີທີ່ມີການຮັບຮອງບົດລາຍງານດັ່ງກ່າວແລ້ວ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕ້ອງສະເໜີໃຫ້ລັດຖະບານພິຈາລະນາ ໂດຍຜ່ານກະຊວງແຜນການ ແລະ ການລົງທຶນ.

ກະຊວງພະລັງງານ ແລະບໍ່ແຮ່ ເປັນຜູ້ພິຈາລະນາ ແລະ ຮັບຮອງ ບົດລາຍງານການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກລະອຽດ ແລະ ແຜນການຂຸດຄົ້ນ.

ໃນກໍລະນີທີ່ມີການຮັບຮອງເອົາເອກະສານດັ່ງກ່າວແລ້ວ ກະຊວງພະລັງງານ ແລະ ບໍ່ແຮ່ ຕ້ອງສະເໜີໃຫ້ລັດຖະບານພິຈາລະນາ ໂດຍຜ່ານກະຊວງແຜນການ ແລະ ການລົງທຶນ.

## ມາດຕາ 43 (ປັບປຸງ). ການສົ່ງຕົວຢ່າງແຮ່ທາດ ເພື່ອຄັດເລືອກເຕັກໂນໂລຊີອອກແບບໂຮງງານ

ຜູ້ລົງທຶນກ່ຽວກັບບໍ່ແຮ່ ສາມາດສົ່ງຕົວຢ່າງແຮ່ທາດໄປທົດລອງ ເພື່ອຄັດເລືອກເຕັກໂນໂລຊີອອກແບບໂຮງງານຢູ່ພາຍໃນ ຫຼື ຕ່າງປະເທດ ໂດຍໄດ້ຮັບອະນຸຍາດຈາກກະຊວງພະລັງງານ ແລະ ບໍ່ແຮ່ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ຜະລິດຕະພັນທີ່ໄດ້ຮັບຈາກການທົດລອງຕົວຢ່າງແຮ່ທາດ ສາມາດຈຳໜ່າຍໄດ້ ໂດຍໄດ້ຮັບການເຫັນດີ ຈາກກະຊວງ ພະລັງງານ ແລະ ບໍ່ແຮ່ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

## ມາດຕາ 44. ການຂຸດຄົ້ນບໍ່ແຮ່

ໃນການດຳເນີນທຸລະກິດ ກ່ຽວກັບການຂຸດຄົ້ນບໍ່ແຮ່ ໃຫ້ປະຕິບັດຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້.

ກຳນົດເວລາການຂຸດຄົ້ນໃນຂອບເຂດເນື້ອທີ່ທັງໝົດ ຕາມສັນຍາສຳປະທານ ແມ່ນບໍ່ໃຫ້ເກີນ ຊາວ ປີ ນັບແຕ່ວັນໄດ້ຮັບອະນຸຍາດຂຸດຄົ້ນເປັນຕົ້ນໄປ ແລະ ສາມາດຕໍ່ໄດ້ ບໍ່ໃຫ້ເກີນ ຫ້າ ປີ ຊຶ່ງລັດເປັນຜູ້ກຳນົດຕາມແຕ່ລະກໍລະນີ ໂດຍອີງຕາມຂະໜາດຂອງບໍ່ແຮ່.

**ມາດຕາ 45. ການປຸງແຕ່ງແຮ່ທາດ**

ການຂຸດຄົ້ນບໍ່ແຮ່ ຕ້ອງຕິດພັນກັບການປຸງແຕ່ງຢູ່ພາຍໃນປະເທດເປັນຕົ້ນຕໍ ເພື່ອຍົກມູນຄ່າແຮ່ທາດ ດ້ວຍການນຳໃຊ້ເຕັກນິກ-ເຕັກໂນໂລຊີ ທີ່ທັນສະໄໝ ແລະ ກ້າວໜ້າ ເພື່ອໃຫ້ກາຍເປັນຜະລິດຕະພັນເຄິ່ງສຳເລັດຮູບ ຫຼື ສຳເລັດຮູບ ຕາມແຕ່ລະປະເພດແຮ່ທາດ ສະໜອງໃຫ້ແກ່ການຜະລິດສິນຄ້າຢູ່ພາຍໃນປະເທດ ແລະ ສົ່ງອອກ ໂດຍສອດຄ່ອງກັບລະບຽບກົດໝາຍ.

**ມາດຕາ 46. ທຸລະກິດອື່ນກ່ຽວກັບບໍ່ແຮ່**

ໃນການດຳເນີນທຸລະກິດກ່ຽວກັບການປຸງແຕ່ງ, ການຊື້-ຂາຍ, ການເຄື່ອນຍ້າຍ, ການຟື້ນຟູເນື້ອທີ່ຂຸດຄົ້ນ ແລະ ການປິດບໍ່ແຮ່ ໃຫ້ປະຕິບັດຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນມາດຕາ 24, 25, 26 ແລະ 27 ຂອງກົດໝາຍສະບັບນີ້.

**ມາດຕາ 47. ການຫັນວິສາຫະກິດ ຫຼື ບໍລິສັດລົງທຶນ**

ໃນກໍລະນີທີ່ຜູ້ລົງທຶນກ່ຽວກັບການຂຸດຄົ້ນບໍ່ແຮ່ ມີຈຸດປະສົງ ຫຼື ມີຄວາມຈຳເປັນຫັນວິສາຫະກິດ ຫຼື ບໍລິສັດຂອງຕົນເປັນປະເພດວິສາຫະກິດ ຫຼື ບໍລິສັດອື່ນ ຕ້ອງສະເໜີຕໍ່ລັດຖະບານພິຈາລະນາ ແລະ ໃຫ້ປະຕິບັດຕາມມາດຕາ 211 ແລະ 220 ຂອງກົດໝາຍວ່າດ້ວຍ ວິສາຫະກິດ.

ການຕອບ ຫຼື ປະຕິເສດ ການຫັນວິສາຫະກິດ ຫຼື ບໍລິສັດລົງທຶນ ກ່ຽວກັບການຂຸດຄົ້ນບໍ່ແຮ່ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ລົງທຶນນັ້ນຊາບ ພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນ ຕົ້ນໄປ.

**ມາດຕາ 48. ຄະນະກຳມະການຄົ້ນຄວ້າ ແລະ ຊີ້ນຳໂຄງການຂະໜາດໃຫຍ່**

ຄະນະກຳມະການຄົ້ນຄວ້າ ແລະ ຊີ້ນຳໂຄງການຂະໜາດໃຫຍ່ ສ້າງຕັ້ງຂຶ້ນ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດສັນຍາໃຫ້ດຳເນີນໄປຢ່າງຖືກຕ້ອງ ແລະ ມີປະສິດທິຜົນ ໂດຍແມ່ນລັດຖະບານເປັນຜູ້ແຕ່ງຕັ້ງ ຊຶ່ງປະກອບດ້ວຍ:

1. ລັດຖະມົນຕີຊ່ວຍວ່າ ການກະຊວງ ພະລັງງານ ແລະ ບໍ່ແຮ່ ເປັນປະທານ;
2. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ ທີ່ກ່ຽວຂ້ອງ ເປັນຮອງປະທານ;
3. ຜູ້ຕາງໜ້າຂະແໜງການທີ່ກ່ຽວຂ້ອງຈຳນວນໜຶ່ງ ເປັນຄະນະ.

ການຈັດຕັ້ງ, ການເຄື່ອນໄຫວ ລວມທັງ ສິດ ແລະ ໜ້າທີ່ຂອງຄະນະກຳມະການຄົ້ນຄວ້າ ແລະ ຊີ້ນຳ ໂຄງການຂະໜາດໃຫຍ່ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ 3
## ທຸລະກິດກ່ຽວກັບແຮ່ທາດສະເພາະ

**ມາດຕາ 49. ທຸລະກິດກ່ຽວກັບແຮ່ທາດສະເພາະ**

ທຸລະກິດກ່ຽວກັບແຮ່ທາດສະເພາະ ແມ່ນ ການດຳເນີນທຸລະກິດທີ່ບໍ່ຈຳເປັນຕ້ອງປະຕິບັດຕາມຂັ້ນຕອນການຊອກຄົ້ນ ແລະ ການສຳຫຼວດ ຄືກັນກັບການດຳເນີນທຸລະກິດກ່ຽວກັບແຮ່ທາດ.

**ມາດຕາ 50. ປະເພດທຸລະກິດກ່ຽວກັບແຮ່ທາດສະເພາະ**

**ປະເພດທຸລະກິດກ່ຽວກັບແຮ່ທາດສະເພາະ ມີ ດັ່ງນີ້:**

1. ການຂຸດຄົ້ນແຮ່ທາດແບບຫັດຖະກຳ;
2. ການຂຸດຄົ້ນແຮ່ທາດຂະໜາດນ້ອຍ;
3. ການຂຸດຄົ້ນແຮ່-ຫີນອຸດສາຫະກຳ.

**ມາດຕາ 51. ການຂຸດຄົ້ນແຮ່ທາດແບບຫັດຖະກຳ**

ການຂຸດຄົ້ນແຮ່ທາດແບບຫັດຖະກຳທີ່ເປັນທຸລະກິດ ແມ່ນ ກິດຈະການຂຸດຄົ້ນແຮ່ທາດດ້ວຍການນຳໃຊ້ເຄື່ອງມືຫັດຖະກຳ, ກົນຈັກແຕ່ ຫ້າ ແຮງມ້າລົງມາ ແລະ ແຮງງານບໍ່ເກີນ ສິບ ຄົນ.

ສຳລັບການຂຸດຄົ້ນແຮ່ທາດແບບຫັດຖະກຳທີ່ບໍ່ເປັນອາຊີບຕົ້ນຕໍ, ດຳເນີນຕາມລະດູການດ້ວຍການນຳໃຊ້ເຄື່ອງມືຂຸດຄົ້ນແບບປະຖົມປະຖານ ແລະ ບໍ່ໄດ້ນຳໃຊ້ກົນຈັກຂຸດຄົ້ນ ບໍ່ຖືວ່າເປັນທຸລະກິດ.

ການຂຸດຄົ້ນແຮ່ທາດແບບຫັດຖະກຳ ອະນຸຍາດໃຫ້ສະເພາະແຕ່ພົນລະເມືອງລາວ ທີ່ຕັ້ງພູມລຳເນົາຢູ່ໃນທ້ອງຖິ່ນທີ່ກ່ຽວຂ້ອງເທົ່ານັ້ນ.

ແຮ່ທາດທີ່ອະນຸຍາດໃຫ້ຂຸດຄົ້ນແບບຫັດຖະກຳ ມີ ແຮ່ຄຳຕົກຂ້ອນ, ແຮ່ກົ່ວຕົກຂ້ອນ ແລະທາງແຮ່.

**ມາດຕາ 52. ການຂຸດຄົ້ນແຮ່ທາດຂະໜາດນ້ອຍ**

ການຂຸດຄົ້ນແຮ່ທາດຂະໜາດນ້ອຍ ແມ່ນ ການບຸກເບີກ, ຂຸດ, ຊີ-ເຈາະ, ດູດ, ລະເບີດ, ຄັດຈ້ອນເອົາແຮ່ທາດ ຈາກໜ້າດິນ, ພື້ນດິນ ຫຼື ພື້ນນ້ຳທີ່ບໍ່ເໝາະສົມສຳລັບການຂຸດຄົ້ນແບບອຸດສາຫະກຳ ໃນເນື້ອທີ່ ທີ່ບໍ່ເກີນ ສິບ ເຮັກຕາ.

ການຂຸດຄົ້ນແຮ່ທາດຂະໜາດນ້ອຍ ອະນຸຍາດໃຫ້ສະເພາະແຕ່ນິຕິບຸກຄົນລາວເທົ່ານັ້ນ.

ປະເພດແຮ່ທາດ ແລະ ປະລິມານສະສົມແຮ່ທາດ ທີ່ອະນຸຍາດໃຫ້ຂຸດຄົ້ນແຮ່ທາດຂະໜາດນ້ອຍ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 53. ການຂຸດຄົ້ນແຮ່-ຫີນອຸດສາຫະກຳ**

ແຮ່-ຫີນອຸດສາຫະກຳ ແມ່ນ ແຮ່ທາດອະໂລຫະ ຊຶ່ງມີ ຫີນປູນ, ຫີນອ່ອນ, ຊາຍຜະລິດແກ້ວ, ມາດ, ໂຟດສະຟັດ, ຫີນບາຊານ, ຫີນກາຣານິດ, ກາວແລງ, ບາຣິດ, ລາເຕຣິດ, ຫີນອັງເດໄຊ, ຫີນອາໂດເບ, ຫີນກາໂບຣ, ຫີນແຊກປັງຕິດ, ອາລູໄນ, ໂດໂລໄມ, ແຟວສະປາ, ກຣາຟາຍ, ມາຍກາ ແລະ ປາໂກໄດ.

ການຂຸດຄົ້ນແຮ່-ຫີນອຸດສາຫະກຳ ແມ່ນ ການຂຸດ, ຈົກ, ຊີ-ເຈາະ, ຕັດ, ລະເບີດ ເອົາແຮ່ທາດອະໂລຫະດັ່ງກ່າວ.

**ມາດຕາ 54. ການອະນຸຍາດຂຸດຄົ້ນແຮ່-ຫີນອຸດສາຫະກຳ**

ເຈົ້າແຂວງ, ເຈົ້າຄອງນະຄອນ ເປັນຜູ້ອະນຸຍາດ ເນື້ອທີ່ໃຫ້ຂຸດຄົ້ນແຮ່-ຫີນອຸດສາຫະກຳ ບໍ່ເກີນ ຫ້າເຮັກຕາຕໍ່ ໜຶ່ງຕອນ ແລະ ມີກຳນົດ ຫ້າປີ ຕາມການສະເໜີຂອງຂະແໜງການພະລັງງານ ແລະ ບໍ່ແຮ່ ພາຍຫຼັງທີ່ມີການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ.

ຜູ້ລົງທຶນຂຸດຄົ້ນແຮ່-ຫີນອຸດສາຫະກຳ ຕ້ອງປະກອບສ່ວນໃນການສ້ອມແປງຂົວ, ເສັ້ນທາງ ແລະ ການຕິດຕັ້ງອຸປະກອນຊັ່ງນ້ຳໜັກ ແລະ ອື່ນໆ.

ການຂຸດຄົ້ນແຮ່-ຫີນອຸດສາຫະກຳ ອະນຸຍາດໃຫ້ສະເພາະນິຕິບຸກຄົນລາວ ເທົ່ານັ້ນ.

**ມາດຕາ 55. ການຂຸດຄົ້ນແຮ່ແກ້ວປະເສີດແບບຫັດຖະກຳ**

ການຂຸດຄົ້ນແຮ່ແກ້ວປະເສີດແບບຫັດຖະກຳ ໃຫ້ປະຕິບັດຕາມການຂຸດຄົ້ນແຮ່ທາດແບບຫັດຖະກຳ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍສະບັບນີ້.

**ມາດຕາ 56. ການຂຸດຄົ້ນແຮ່ແກ້ວປະເສີດຂະໜາດນ້ອຍ**

ການຂຸດຄົ້ນແຮ່ແກ້ວປະເສີດຂະໜາດນ້ອຍ ແມ່ນ ການບຸກເບີກ, ຂຸດ ແລະ ຄັດຈ້ອນເອົາແຮ່ແກ້ວ ຈາກ ໜ້າດິນ, ພື້ນດິນ ຫຼື ພື້ນນ້ຳ ດ້ວຍການນຳໃຊ້ກົນຈັກຕາມລະບຽບການ, ແຮງງານບໍ່ເກີນ ສິບຄົນ, ເນື້ອທີ່ບໍ່ເກີນເຄິ່ງ ເຮັກຕາ, ມີອາຍຸ ໜຶ່ງ ປີ ແລະ ສາມາດຕໍ່ໄດ້ແຕ່ລະປີ ຕາມການຕົກລົງຂອງຂະແໜງການພະລັງງານ ແລະ ບໍ່ແຮ່.

ການຂຸດຄົ້ນແຮ່ແກ້ວປະເສີດຂະໜາດນ້ອຍ ອະນຸຍາດໃຫ້ແຕ່ສະເພາະນິຕິບຸກຄົນລາວເທົ່ານັ້ນ.

# ພາກທີ V

# ຄວາມປອດໄພ ແລະ ສິ່ງແວດລ້ອມ

## ໝວດທີ 1

## ຄວາມປອດໄພ

**ມາດຕາ 57. ຄວາມປອດໄພ ແລະ ສຸຂະພາບຂອງຜູ້ອອກແຮງງານ**

ຜູ້ລົງທຶນກ່ຽວກັບແຮ່ທາດ ຕ້ອງສ້າງລະບົບຮັບປະກັນຄວາມປອດໄພ ແລະ ຮັກສາສຸຂະພາບຂອງຜູ້ອອກແຮງງານ ດ້ວຍການກຳນົດມາດຕະການ ແລະ ສ້າງລະບົບສັນຍານເຕືອນໄພ ເພື່ອປ້ອງກັນ, ຄວບຄຸມ, ກຳຈັດ ແລະ ສະກັດກັ້ນຜົນກະທົບ, ບັນດາຄວາມສ່ຽງທີ່ເປັນໄພອັນຕະລາຍຕໍ່ຜູ້ອອກແຮງງານໃນເຂດບໍ່ແຮ່.

ໃນທຸກກິດຈະການກ່ຽວກັບແຮ່ທາດ ຕ້ອງໄດ້ສ້າງຕັ້ງຄະນະກຳມະການ ເພື່ອຄວາມປອດໄພ ແລະ ສຸຂະພາບຂອງຜູ້ອອກແຮງງານ ຊຶ່ງຕ້ອງມີຕົວແທນຂອງຜູ້ອອກແຮງງານເຂົ້າຮ່ວມນຳ ຕາມກົດໝາຍວ່າດ້ວຍ ແຮງງານ.

ຜູ້ລົງທຶນກ່ຽວກັບແຮ່ທາດ ຕ້ອງໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກໃຫ້ແກ່ການປະຕິບັດໜ້າທີ່ຂອງຄະນະກຳມະການດັ່ງກ່າວ.

**ມາດຕາ 58. ມາດຕະການຮັບປະກັນຄວາມປອດໄພ ແລະ ສຸຂະພາບຂອງຜູ້ອອກແຮງງານ**

ເພື່ອຮັບປະກັນຄວາມປອດໄພ ແລະ ສຸຂະພາບຂອງຜູ້ອອກແຮງງານນັ້ນ ຜູ້ລົງທຶນກ່ຽວກັບແຮ່ທາດ ຕ້ອງປະຕິບັດມາດຕະການຕົ້ນຕໍ ດັ່ງນີ້:

1. ວາງລະບຽບການ ແລະ ມາດຕະການ ກ່ຽວກັບຄວາມປອດໄພ ແລະ ສຸຂະພາບຂອງຜູ້ອອກແຮງງານ ໂດຍມີການກວດກາສຸຂະພາບຂອງຜູ້ອອກແຮງງານຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ;
2. ອອກແບບຂຸດຄົ້ນ, ກໍ່ສ້າງ, ຕິດຕັ້ງອຸປະກອນກົນຈັກຢ່າງຖືກຕ້ອງ ຕາມມາດຕະຖານເຕັກນິກ;
3. ນຳໃຊ້ເຕັກນິກ-ເຕັກໂນໂລຊີ ທີ່ມີປະສິດທິຜົນໃນການປ້ອງກັນມົນລະພິດ, ສະໜອງອຸປະກອນ ແລະ ເຄື່ອງນຸ່ງຫົ່ມ ທີ່ຮັບປະກັນຄວາມປອດໄພໃຫ້ແກ່ຜູ້ອອກແຮງງານ;
4. ມີສະຖານທີ່, ສາງ ທີ່ຮັບປະກັນສຳລັບການເກັບມ້ຽນວັດຖຸລະເບີດ ແລະ ວັດຖຸເຄມີ;
5. ມີລະບົບສັນຍານເຕືອນໄພ ແລະ ແກ້ໄຂເຫດການສຸກເສີນ ຫຼື ອຸປະຕິເຫດ;
6. ລາຍງານກ່ຽວກັບສະພາບຄວາມປອດໄພ ແລະ ສຸຂະພາບຂອງຜູ້ອອກແຮງງານ ລວມທັງສະຖິຕິທີ່ ກ່ຽວຂ້ອງຢ່າງເປັນປົກກະຕິ.

**ມາດຕາ 59. ການລາຍງານກ່ຽວກັບອຸປະຕິເຫດ**

ອຸປະຕິເຫດ ຫຼື ປາກົດການອື່ນທີ່ເກີດຂຶ້ນຈາກກິດຈະການ ກ່ຽວກັບແຮ່ທາດ ຊຶ່ງມີ ຫຼື ອາດຈະມີຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ຫຼື ສຸຂະພາບຂອງບຸກຄົນ ຫຼື ຊຸມຊົນນັ້ນ ຜູ້ລົງທຶນຕ້ອງລາຍງານພາຍໃນກຳນົດເວລາ ຊາວສີ່ ຊົ່ວໂມງ ໃຫ້ອົງການປົກຄອງທ້ອງຖິ່ນ, ປະຊາຊົນອ້ອມຂ້າງ ພ້ອມດ້ວຍຂະແໜງການທີ່ກ່ຽວຂ້ອງຊາບ ພ້ອມທັງນຳໃຊ້ມາດຕະການປ້ອງກັນ ແລະ ແກ້ໄຂບັນຫາຕ່າງໆຢ່າງທັນເວລາ.

## ໝວດທີ 2
## ສິ່ງແວດລ້ອມ ແລະ ການພັດທະນາເຂດແຮ່ທາດແບບຍືນຍົງ

**ມາດຕາ 60. ການປົກປັກຮັກສາສິ່ງແວດລ້ອມ ທຳມະຊາດ ແລະ ສັງຄົມ**

**ເພື່ອຫຼີກເວັ້ນ ຫຼື ຈຳກັດຜົນກະທົບຕໍ່ສິ່ງແວດລ້ອມ ທຳມະຊາດ ແລະ ສັງຄົມ ຜູ້ລົງທຶນກ່ຽວກັບແຮ່ທາດ ຕ້ອງປະຕິບັດມາດຕະການ ດັ່ງນີ້:**

1. ສ້າງແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ແຜນຍົກຍ້າຍຈັດສັນປະຊາຊົນ ທີ່ໄດ້ຮັບຜົນກະທົບ ຈາກທຸລະກິດກ່ຽວກັບແຮ່ທາດ ຕາມລະບຽບການ;
2. ວາງແຜນການຟື້ນຟູເນື້ອທີ່ຂຸດຄົ້ນ ແລະ ການປິດບໍ່ແຮ່ ເພື່ອໃຫ້ສາມາດນຳໃຊ້ເຂົ້າໃນເປົ້າໝາຍໃດໜຶ່ງໄດ້;
3. ຮັບຜິດຊອບໃນການໃຊ້ແທນຄ່າເສຍຫາຍ ເນື່ອງມາຈາກຜົນກະທົບຈາກການດຳເນີນທຸລະກິດ ກ່ຽວກັບແຮ່ທາດ ຕາມລະບຽບການ;
4. ປະກອບທຶນໃຫ້ແກ່ກອງທຶນປົກປັກຮັກສາສິ່ງແວດລ້ອມ ໃນໂຄງການຂອງຕົນ;
5. ບຳບັດນ້ຳເສຍອອກຈາກໂຄງການ ເພື່ອຮັບປະກັນສຸຂະພາບ, ຊີວິດຂອງຄົນ, ສັດ ແລະ ສິ່ງແວດລ້ອມ;
6. ສະຫຼຸບ, ລາຍງານການປະເມີນຜົນກະທົບຕໍ່ສິ່ງແວ້ດລ້ອມທຳມະຊາດ ແລະ ສັງຄົມ ໃຫ້ອົງການຄຸ້ມຄອງ ແລະ ກວດກາວຽກງານແຮ່ທາດທີ່ກ່ຽວຂ້ອງຢ່າງເປັນປະຈຳ.

**ມາດຕາ 61. ການພັດທະນາເຂດແຮ່ທາດແບບຍືນຍົງ**

**ເພື່ອຮັບປະກັນການພັດທະນາເຂດແຮ່ທາດແບບຍືນຍົງ ຜູ້ລົງທຶນກ່ຽວກັບແຮ່ທາດ ຕ້ອງປະຕິບັດດັ່ງນີ້:**

1. ຂຸດຄົ້ນ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ສອດຄ່ອງກັບແຜນຍຸດທະສາດ ໃນການພັດທະນາອຸດສາຫະກຳບໍ່ແຮ່ ແລະ ແຜນພັດທະນາ, ນຳໃຊ້ທີ່ດິນແບບຮອບດ້ານ;

2. ຮັບປະກັນຄວາມດຸນດ່ຽງ ລະຫວ່າງການຂຸດຄົ້ນກັບການພັດທະນາເສດຖະກິດ-ສັງຄົມ, ການອະນຸລັກຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ;
3. ແກ້ໄຂຜົນກະທົບຕ່າງໆ ທີ່ເກີດຂຶ້ນໃນເວລາຂຸດຄົ້ນ ແລະ ຫຼັງປິດບໍ່ແຮ່, ພັດທະນາວິຊາຊີບໃຫ້ແກ່ປະຊາຊົນໃນເຂດໂຄງການ ແລະ ພັດທະນາຊຸມຊົນ ໂດຍອີງໃສ່ທ່າແຮງຂອງທ້ອງຖິ່ນ ແນໃສ່ຮັບປະກັນການມີວຽກເຮັດງານທຳຂອງປະຊາຊົນ ແລະ ເຮັດໃຫ້ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ.

# ພາກທີ VI
# ສິດ, ໜ້າທີ່ ແລະ ພັນທະຂອງຜູ້ດຳເນີນທຸລະກິດກ່ຽວກັບແຮ່ທາດ

## ໝວດທີ 1
## ສິດ, ໜ້າທີ່ ແລະ ພັນທະຂອງຜູ້ດຳເນີນທຸລະກິດ ກ່ຽວກັບການສຶກສາຂໍ້ມູນທາງດ້ານທໍລະນີສາດແລະ ແຫຼ່ງແຮ່

**ມາດຕາ 62 (ປັບປຸງ). ສິດ ແລະ ໜ້າທີ່ຂອງຜູ້ດຳເນີນທຸລະກິດ ກ່ຽວກັບການສຶກສາຂໍ້ມູນທາງດ້ານທໍລະນີສາດ ແລະ ແຫຼ່ງແຮ່**

ຜູ້ດຳເນີນທຸລະກິດ ກ່ຽວກັບການສຶກສາຂໍ້ມູນທາງດ້ານທໍລະນີສາດ ແລະ ແຫຼ່ງແຮ່ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ເລີ່ມດຳເນີນກິດຈະການຂອງຕົນພາຍໃນ ຫົກສິບ ວັນ ນັບແຕ່ວັນໄດ້ຮັບອະນຸຍາດຊອກຄົ້ນ ຫຼື ສຳຫຼວດແຮ່ທາດ ເປັນຕົ້ນໄປ;
2. ລາຍງານໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊາບພາຍໃນກຳນົດ ສາມສິບ ວັນ ພາຍຫຼັງ ທີ່ພົບເຫັນແຮ່ທາດຊະນິດອື່ນ ທີ່ຕົນບໍ່ໄດ້ຮັບອະນຸຍາດໃຫ້ຊອກຄົ້ນ ຫຼື ສຳຫຼວດນັ້ນ ແລະ ຕ້ອງຮັກສາໄວ້ເປັນຄວາມລັບ;
3. ຮັບປະກັນຄວາມປອດໄພໃນການດຳເນີນການຊອກຄົ້ນ ຫຼື ການສຳຫຼວດແຮ່ທາດ;
4. ລາຍງານສະພາບການຕ່າງໆ ເຊັ່ນ ອຸປະຕິເຫດ ຫຼື ເຫດການໃດໜຶ່ງ ຊຶ່ງເປັນໄພຂົ່ມຂູ່ທີ່ຈະສ້າງຄວາມເສັຍຫາຍຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ;
5. ໄດ້ຮັບການອຳນວຍຄວາມສະດວກດ້ານຕ່າງໆ ເປັນຕົ້ນ ການເຂົ້າໄປ ຫຼື ຜ່ານທີ່ດິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ໄປຫາເຂດສຳປະທານຂອງຕົນ ແຕ່ຕ້ອງໄດ້ມີການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຜູ້ມີສິດນຳໃຊ້ທີ່ດິນນັ້ນ;
6. ທັບວິສາຫະກິດ ຫຼື ບໍລິສັດລົງທຶນຂອງຕົນ ຕາມລະບຽບການ;

7. ສະຫຼຸບ, ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຂຸດຄົ້ນ ຫຼື ສຳຫຼວດ ປະຈຳເດືອນ, ສາມເດືອນ, ຫົກເດືອນ, ເກົ້າເດືອນ ແລະ ປະຈຳປີ ໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 63 (ປັບປຸງ). ພັນທະຂອງຜູ້ດຳເນີນທຸລະກິດ ກ່ຽວກັບການສຶກສາຂໍ້ມູນທາງດ້ານທໍລະນີສາດ ແລະ ແຫຼ່ງແຮ່**

ຜູ້ດຳເນີນທຸລະກິດກ່ຽວກັບການສຶກສາຂໍ້ມູນທາງດ້ານທໍລະນີສາດ ແລະ ແຫຼ່ງແຮ່ ມີພັນທະຕົ້ນຕໍ ດັ່ງນີ້:

1. ພົວພັນ, ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ບ່ອນທີ່ດຳເນີນກິດຈະການ ແລະ ດຳເນີນການຂຸດຄົ້ນ ຫຼື ການສຳຫຼວດ ຕາມແຜນການ, ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ທີ່ໄດ້ຮັບຮອງເອົາແລ້ວ;
2. ເກັບຮັກສາເອກະສານຕ່າງໆ ທີ່ພົວພັນກັບວຽກງານຂຸດຄົ້ນ ແລະ ສຳຫຼວດ ຂອງຕົນ ເຊັ່ນ ບົດບັນທຶກພາກສະໜາມ, ການເກັບຕົວຢ່າງ, ການທົດສອບ, ການວິໄຈ, ມາດຕະການໃນການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາສັງຄົມ;
3. ເລີກຮື້ອອກ ສິ່ງກໍ່ສ້າງ, ສິ່ງຕິດຕັ້ງຊົ່ວຄາວ, ທີ່ພັກເຊົາ ແລະ ອຸປະກອນຮັບໃຊ້ໃນວຽກງານຂຸດຄົ້ນ ຫຼື ສຳຫຼວດ ພາຍໃນກຳນົດ ສາມສິບ ວັນ ຫຼັງຈາກການອະນຸຍາດໄດ້ສິ້ນສຸດແລ້ວ ເວັ້ນເສຍແຕ່ ລັດຫາກຕ້ອງການນຳໃຊ້ສິ່ງຂອງເຫຼົ່ານັ້ນ;
4. ປັບປຸງທີ່ດິນທີ່ໄດ້ຮັບຜົນກະທົບຈາກວຽກງານຂຸດຄົ້ນ ແລະ ສຳຫຼວດ ໃຫ້ຄືນສູ່ສະພາບທີ່ສາມາດນຳໃຊ້ໄດ້ ເຊັ່ນ ປົວແປງ, ຟື້ນຟູຄືນ, ຖົມ, ອັດ, ປັບດິນຄືນ, ອະນາໄມທາດເຄມີ, ຍົກຍ້າຍ ສິ່ງກີດຂວາງ ແລະ ປູກຕົ້ນໄມ້ທົດແທນຄືນ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;
5 ເສຍຄ່າສຳປະທານທີ່ດິນ, ພາສີ-ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການວິຊາການ, ປະກອບສ່ວນເຂົ້າໃນກອງທຶນປົກປັກຮັກສາສິ່ງແວດລ້ອມ, ຄ່າໃຊ້ຈ່າຍເຂົ້າໃນການພັດທະນາຊຸມຊົນ, ພັດທະນາຊັບພະຍາກອນມະນຸດ, ຄຸ້ມຄອງໂຄງການ ແລະ ພັດທະນາເຂດແຮ່ທາດແບບຍືນຍົງ.

## ໝວດທີ 2
## ສິດ, ໜ້າທີ່ ແລະ ພັນທະຂອງຜູ້ດຳເນີນທຸລະກິດກ່ຽວກັບບໍ່ແຮ່

**ມາດຕາ 64. ສິດ ແລະ ໜ້າທີ່ຂອງຜູ້ດຳເນີນທຸລະກິດກ່ຽວກັບບໍ່ແຮ່**

ຜູ້ດຳເນີນທຸລະກິດກ່ຽວກັບບໍ່ແຮ່ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ດຳເນີນການກໍ່ສ້າງ ແລະ ຕິດຕັ້ງອຸປະກອນ, ໂຮງງານ ແລະ ຕຶກອາຄານຮັບໃຊ້ການຂຸດຄົ້ນ, ການເຄື່ອນຍ້າຍ, ການປຸງແຕ່ງ, ການວິໄຈ, ການລ້າງກັ່ນ, ການຫຼອມ ແລະ ການເກັບມ້ຽນ;
2. ເປັນເຈົ້າກຳມະສິດຕໍ່ຊັບສິນທີ່ໄດ້ມາຈາກການດຳເນີນທຸລະກິດກ່ຽວກັບບໍ່ແຮ່;
3. ຈຳໜ່າຍຜະລິດຕະພັນແຮ່ທາດທີ່ໄດ້ຈາກກິດຈະການຂຸດຄົ້ນຕາມລະບຽບການ;
4. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນຕາມກົດໝາຍ;
5. ບໍ່ເປີດເຜີຍຂໍ້ມູນ-ຂ່າວສານ ທີ່ເປັນຄວາມລັບຂອງຕົນໃນການດຳເນີນທຸລະກິດ ຫຼື ວິທະຍາສາດ ແລະ ສິດທິບັດທາງດ້ານເຕັກໂນໂລຊີ ໃຫ້ບຸກຄົນ ແລະ ນິຕິບຸກຄົນອື່ນ ເວັ້ນເສຍແຕ່ລັດເທົ່ານັ້ນ;
6. ຫັນວິສາຫະກິດ ຫຼື ບໍລິສັດລົງທຶນຂອງຕົນ ຕາມລະບຽບການ;
7. ດຳເນີນກິດຈະການອື່ນທີ່ເຫັນວ່າມີເຫດຜົນ ຊຶ່ງພົວພັນກັບການດຳເນີນການຂຸດຄົ້ນແຮ່ທາດ ຕາມການເຫັນດີຂອງລັດຖະບານ;
8. ສະເໜີໂຈະການເຄື່ອນໄຫວຊົ່ວຄາວຕໍ່ຂະແໜງການພະລັງງານ ແລະ ບໍ່ແຮ່ ໃນກໍລະນີທີ່ມີເຫດສຸດວິໄສເກີດຂຶ້ນ ຊຶ່ງພາໃຫ້ຕົນບໍ່ສາມາດດຳເນີນກິດຈະການໄດ້;
9. ໄດ້ຮັບການອຳນວຍຄວາມສະດວກດ້ານຕ່າງໆ ເປັນຕົ້ນ ການເຂົ້າໄປ ຫຼື ຜ່ານທີ່ດິນຂອງບຸກຄົນ ຫຼື ການຈັດຕັ້ງອື່ນ ໄປຫາເຂດສຳປະທານຂອງຕົນ ແຕ່ຕ້ອງໄດ້ມີການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຜູ້ມີສິດນຳໃຊ້ທີ່ດິນນັ້ນ;
10. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 65 (ປັບປຸງ). ພັນທະຂອງຜູ້ດຳເນີນທຸລະກິດກ່ຽວກັບບໍ່ແຮ່**

ຜູ້ດຳເນີນທຸລະກິດກ່ຽວກັບບໍ່ແຮ່ ມີ ພັນທະ ດັ່ງນີ້:

1. ດຳເນີນການຂຸດຄົ້ນຕາມແຜນການທີ່ໄດ້ຮັບຮອງ;
2. ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງລັດ ໃນການກວດກາວຽກງານຂຸດຄົ້ນ;
3. ນຳໃຊ້ ຜະລິດຕະພັນທ້ອງຖິ່ນ ຫຼື ພາຍໃນປະເທດໃຫ້ຫຼາຍເທົ່າທີ່ເປັນໄປໄດ້, ການບໍລິການຂົນສົ່ງແຮ່ທາດ ຮ່ວມກັບວິສາຫະກິດ ຫຼື ບໍລິສັດຂົນສົ່ງພາຍໃນປະເທດ, ແຮງງານທີ່ເປັນພົນລະເມືອງລາວ ເຂົ້າໃນທຸກຂົງເຂດວຽກງານຕາມຄວາມສາມາດ, ເຕັກນິກ-

ເຕັກໂນໂລຊີ ທີ່ມີປະສິດທິຜົນ ໃນການປ້ອງກັນມົນລະພິດ, ສະໜອງເຄື່ອງມື, ອຸປະກອນ ແລະ ສິ່ງເອື້ອອຳນວຍຕ່າງໆ ໃນການຮັກສາຄວາມປອດໄພ ແລະ ສຸຂະພາບຂອງຜູ້ອອກແຮງງານ ແລະ ເອົາໃຈໃສ່ດ້ານສະຫວັດດີການສັງຄົມ ແລະ ນະໂຍບາຍອື່ນຕໍ່ຜູ້ອອກແຮງງານ;

4. ນຳໃຊ້ ແລະ ກໍ່ສ້າງ ແຮງງານລາວ ດ້ວຍການຖ່າຍທອດຄວາມຊຳນິຊຳນານງານ ແລະ ເຕັກໂນໂລຊີ ທັງໃນໄລຍະສັ້ນ ແລະ ໄລຍະຍາວ ເພື່ອທົດແທນການນຳເຂົ້າແຮງງານຈາກຕ່າງປະເທດ;
5. ໃຊ້ແທນຄ່າຍົກຍ້າຍ, ຄ່າທີ່ດິນ ແລະ ຜົນລະປູກ, ຈັດສັນບ່ອນຢູ່, ບ່ອນທຳມາຫາກິນ ທີ່ດີກວ່າເກົ່າ ໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບຈາກການດຳເນີນທຸລະກິດກ່ຽວກັບບໍ່ແຮ່;
6. ເກັບຮັກສາຂໍ້ມູນທາງດ້ານເຕັກນິກກ່ຽວກັບຕົວຢ່າງແຮ່ທາດ, ແຜນແຕ້ມ, ແຜນທີ່, ຂໍ້ມູນຂອງການຂຸດຄົ້ນ, ການຕີຄວາມໝາຍ ພ້ອມດ້ວຍລະບົບບັນຊີການເງິນ ແລະ ຊັບສິນຢູ່ພາກສະໜາມ;
7. ບຳບັດນ້ຳເສຍ, ຈຳກັດມົນລະພິດທາງອາກາດ, ຝຸ່ນລະອອງ, ສຽງ, ສານເຄມີທີ່ຕົກຄ້າງ, ເກັບມ້ຽນ ແລະ ຖິ້ມແຮ່ທາດເສດເຫຼືອ ດ້ວຍວິທີການທີ່ສອດຄ່ອງ ຕາມແຜນການຄຸ້ມຄອງສິ່ງແວດລ້ອມ;
8. ລາຍງານໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ຢ່າງທັນການກ່ຽວກັບອຸປະຕິເຫດ ຫຼື ເຫດການໃດໜຶ່ງທີ່ໄດ້ເກີດຂຶ້ນ ຫຼື ທີ່ອາດຈະເກີດຂຶ້ນ, ສະຫຼຸບ, ລາຍງານຂໍ້ມູນຕ່າງໆ ກ່ຽວກັບການສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງ ປະຈຳເດືອນ, ປະຈຳໄຕມາດ ແລະ ປະຈຳປີ ລວມທັງບັນຊີການເງິນ ຕໍ່ຂະແໜງການພະລັງງານ ແລະ ບໍ່ແຮ່;
9. ເສຍຄ່າສຳປະທານທີ່ດິນ, ຄ່າຊັບພະຍາກອນແຮ່ທາດ, ພາສີ-ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການວິຊາການ, ປະກອບສ່ວນເຂົ້າໃນກອງທຶນປົກປັກຮັກສາສິ່ງແວດລ້ອມ, ຄ່າໃຊ້ຈ່າຍເຂົ້າໃນການພັດທະນາຊຸມຊົນ, ພັດທະນາຊັບພະຍາກອນມະນຸດ, ຄຸ້ມຄອງໂຄງການ ແລະ ພັດທະນາເຂດແຮ່ທາດ ແບບຍືນຍົງ;
10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 3
## ສິດ, ໜ້າທີ່ ແລະ ພັນທະຂອງຜູ້ດຳເນີນທຸລະກິດ ກ່ຽວກັບແຮ່ທາດສະເພາະ

**ມາດຕາ 66. ສິດ ແລະ ໜ້າທີ່ ຂອງຜູ້ດຳເນີນທຸລະກິດກ່ຽວກັບແຮ່ທາດສະເພາະ**

ຜູ້ດຳເນີນທຸລະກິດ ກ່ຽວກັບແຮ່ທາດສະເພາະ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ດຳເນີນການຂຸດຄົ້ນແຮ່ທາດສະເພາະ ພາຍໃນເຂດທີ່ຕົນໄດ້ຮັບອະນຸຍາດ ໂດຍສອດຄ່ອງກັບວິທີການຂຸດຄົ້ນແຮ່ທາດ, ການພັດທະນາເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ;
2. ປຸງແຕ່ງ ແລະ ຊື້-ຂາຍແຮ່ທາດສະເພາະ ຕາມລະບຽບການ;
3. ໄດ້ຮັບການອຳນວຍຄວາມສະດວກດ້ານຕ່າງໆ ເປັນຕົ້ນ ການເຂົ້າໄປ ຫຼື ຜ່ານທີ່ດິນຂອງບຸກຄົນ ຫຼື ການຈັດຕັ້ງອື່ນ ໄປຫາເຂດສຳປະທານຂອງຕົນ ແຕ່ຕ້ອງໄດ້ມີການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຜູ້ມີສິດນຳໃຊ້ທີ່ດິນນັ້ນ;
4. ສະຫຼຸບ, ລາຍງານ ປະຈຳເດືອນ, ສາມເດືອນ, ຫົກເດືອນ ແລະ ປະຈຳປີ ໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ກ່ຽວກັບການຜະລິດແຮ່ທາດ, ມູນຄ່າ, ການຈຳໜ່າຍຜະລິດຕະພັນ ແລະ ຈຳນວນກຳມະກອນທີ່ຢູ່ປະຈຳ.

**ມາດຕາ 67 (ປັບປຸງ). ພັນທະຂອງຜູ້ດຳເນີນທຸລະກິດກ່ຽວກັບແຮ່ທາດສະເພາະ**

ຜູ້ດຳເນີນທຸລະກິດກ່ຽວກັບແຮ່ທາດສະເພາະ ມີ ພັນທະ ດັ່ງນີ້:

1. ດຳເນີນການຂຸດຄົ້ນຕາມແຜນການທີ່ໄດ້ຮັບຮອງ;
2. ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງລັດໃນການກວດກາວຽກງານຂຸດຄົ້ນ;
3. ນຳໃຊ້ເຄື່ອງມື ແລະ ກົນຈັກທີ່ສາມາດປ້ອງກັນມົນລະພິດ, ສະໜອງເຄື່ອງມື, ອຸປະກອນ ແລະ ສິ່ງເອື້ອອຳນວຍຕ່າງໆ ໃນການຮັກສາຄວາມປອດໄພ ແລະ ສຸຂະພາບຂອງຜູ້ອອກແຮງງານ;
4. ໃຊ້ແທນຄ່າຍົກຍ້າຍ, ຄ່າທີ່ດິນ ແລະ ຜົນລະປູກ, ຈັດສັນບ່ອນຢູ່ ແລະ ບ່ອນທຳມາຫາກິນທີ່ດີກວ່າເກົ່າ ໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບ ຈາກການດຳເນີນທຸລະກິດ ກ່ຽວກັບແຮ່ທາດ ສະເພາະ;
5. ອະນາໄມເສັ້ນທາງຕ່າງໆ ເມື່ອມີການຂົນສົ່ງແຮ່-ຫີນອຸດສາຫະກຳ, ເກັບມ້ຽນ, ຖົມແຮ່ທາດເສດເຫຼືອ ແລະ ກຳຈັດສານເຄມີທີ່ຕົກຄ້າງ ດ້ວຍວິທີການທີ່ສອດຄ່ອງ ຕາມແຜນການຄຸ້ມຄອງສິ່ງແວດລ້ອມ;

6. ລາຍງານໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ຢ່າງທັນການ ກ່ຽວກັບອຸປະຕິເຫດ ຫຼື ເຫດການໃດໜຶ່ງທີ່ໄດ້ເກີດຂຶ້ນ ຫຼື ທີ່ອາດຈະເກີດຂຶ້ນ, ສະຫຼຸບ, ລາຍງານຂໍ້ມູນຕ່າງໆ ກ່ຽວກັບການສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງ ປະຈຳເດືອນ, ປະຈຳໄຕມາດ ແລະ ປະຈຳປີ ລວມທັງບັນຊີ ການເງິນຕໍ່ຂະແໜງການພະລັງງານ ແລະ ບໍ່ແຮ່;
7. ເສັຍຄ່າສຳປະທານທີ່ດິນ, ຄ່າຊັບພະຍາກອນແຮ່ທາດ, ພາສີ-ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການວິຊາການ, ປະກອບສ່ວນເຂົ້າໃນກອງທຶນປົກປັກຮັກສາສິ່ງແວດລ້ອມ, ຄ່າໃຊ້ຈ່າຍເຂົ້າໃນການພັດທະນາຊຸມຊົນ, ພັດທະນາຊັບພະຍາກອນມະນຸດ, ຄຸ້ມຄອງ ໂຄງການ ແລະ ພັດທະນາເຂດແຮ່ທາດ ແບບຍືນຍົງ;
8. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 68 (ປັບປຸງ). ການໃຫ້ບໍລິການ ແລະ ພັນທະທາງດ້ານການເງິນຂອງຜູ້ດຳເນີນທຸລະກິດ ກ່ຽວກັບແຮ່ທາດ**

**ນອກຈາກການດຳເນີນທຸລະກິດ ກ່ຽວກັບແຮ່ທາດຂອງຕົນແລ້ວ ຜູ້ດຳເນີນທຸລະກິດດັ່ງກ່າວ ຍັງສາມາດໃຫ້ການບໍລິການກ່ຽວກັບວຽກງານແຮ່ທາດ ດັ່ງນີ້:**

1. ການບໍລິການສຳຫຼວດສ້າງແຜນທີ່;
2. ການບໍລິການສຳຫຼວດທໍລະນີວັດຖຸ;
3. ການບໍລິການເຈາະສຳຫຼວດ;
4. ການບໍລິການຂຸດຄົ້ນ;
5. ການບໍລິການດ້ານການວິໄຈ;
6. ການບໍລິການໃຫ້ຄຳປຶກສາດ້ານບໍ່ແຮ່;
7. ການບໍລິການປຸງແຕ່ງ ຫຼື ຊື້-ຂາຍແຮ່ ແລະ ການບໍລິການທຸລະກິດອື່ນ ກ່ຽວກັບແຮ່ທາດ.

ຜູ້ດຳເນີນທຸລະກິດດັ່ງກ່າວ ທີ່ມີລາຍຮັບຈາກການໃຫ້ການບໍລິການໃດໜຶ່ງ ທີ່ໄດ້ກ່າວມາຂ້າງເທິງນີ້ ຕ້ອງປະຕິບັດພັນທະທາງດ້ານການເງິນ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

# ພາກທີ VII
# ຮຸ້ນຂອງລັດຖະບານ

**ມາດຕາ 69. ການເຂົ້າຮຸ້ນຂອງລັດຖະບານ**

ຫຼັງຈາກຜູ້ລົງທຶນໄດ້ສຳເລັດການສຳຫຼວດ ແລະ ສະເໜີບົດລາຍງານ ກ່ຽວກັບການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກລະອຽດແລ້ວ ລັດຖະບານ ມີສິດເຂົ້າຖືຮຸ້ນໃນທຸລະກິດ ກ່ຽວກັບແຮ່ທາດນັ້ນ.

**ມາດຕາ 70. ການແຈ້ງກ່ຽວກັບການເຂົ້າຮຸ້ນຂອງລັດຖະບານ**

ລັດຖະບານ ແຈ້ງຕອບການເຂົ້າ ຫຼື ປະຕິເສດການເຂົ້າຮຸ້ນຂອງຕົນຕໍ່ຜູ້ລົງທຶນ ກ່ຽວກັບແຮ່ທາດ ພາຍໃນກຳນົດເວລາ ໜຶ່ງຮ້ອຍຊາວ ວັນ ນັບແຕ່ວັນໄດ້ຮັບບົດລາຍງານ ກ່ຽວກັບການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກລະອຽດ ຂອງຜູ້ລົງທຶນນັ້ນເປັນຕົ້ນໄປ.

**ມາດຕາ 71 (ປັບປຸງ). ການຖອກຮຸ້ນຂອງລັດຖະບານ**

ພາຍຫຼັງທີ່ລັດຖະບານໄດ້ແຈ້ງຕອບການເຂົ້າຮຸ້ນຕໍ່ຜູ້ລົງທຶນ ກ່ຽວກັບແຮ່ທາດນັ້ນແລ້ວ ການຖອກຮຸ້ນອາດຈະປະຕິບັດດ້ວຍຮູບການຕ່າງໆ ເປັນຕົ້ນ ຖອກດ້ວຍເງິນສົດ ຫຼື ໃຫ້ຜູ້ລົງທຶນຖອກຮຸ້ນກ່ອນ ແລ້ວຈຶ່ງເອົາເງິນປັນຜົນທົດແທນ ຫຼື ດ້ວຍຮູບການອື່ນ ຕາມການຕົກລົງກັນ.

ລັດຖະບານ ສາມາດຫັນເອົາແຫຼ່ງແຮ່ເປັນທຶນ ເພື່ອປະກອບເຂົ້າເປັນຮຸ້ນຂອງຕົນກໍໄດ້.

**ມາດຕາ 72. ຕົວແທນຂອງລັດຖະບານ**

ລັດຖະບານ ມີສິດແຕ່ງຕັ້ງຕົວແທນຂອງຕົນເຂົ້າຢູ່ໃນສະພາຜູ້ອຳນວຍການຂອງວິສາຫະກິດ ຫຼື ບໍລິສັດ ທີ່ຕົນໄດ້ຖືຮຸ້ນຢູ່ນັ້ນ ຕາມລະບຽບການ.

## ພາກທີ VIII
## ຂໍ້ຫ້າມ

**ມາດຕາ 73. ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ກວດກາບໍ່ແຮ່**

**ຫ້າມພະນັກງານ ແລະ ເຈົ້າໜ້າທີ່ກວດກາບໍ່ແຮ່ ມີການກະທຳ ດັ່ງນີ້:**

1. ສວຍໃຊ້ໜ້າທີ່ຕຳແໜ່ງ ແລະ ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ;
2. ໃຊ້ສິດ ໜ້າທີ່ເກີນຂອບເຂດ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດຜົນປະໂຫຍດອັນຊອບທຳຂອງປະຊາຊົນ;
3. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບຕໍ່ວຽກງານແຮ່ທາດ ທີ່ການຈັດຕັ້ງມອບໝາຍໃຫ້;
4. ເປີດເຜີຍຄວາມລັບຂອງລັດ ແລະ ຂອງລັດຖະການ ຫຼື ຄວາມລັບທາງດ້ານການຄ້າ-ວິຊາການ ກ່ຽວກັບແຮ່ທາດ;
5. ປອມແປງເອກະສານ ເຊັ່ນ ປອມແປງລາຍເຊັນ, ຕາປະທັບ, ບັນຊີ ແລະ ຂໍ້ມູນກິດຈະການກ່ຽວກັບແຮ່ທາດ;
6. ເຂົ້າຮ່ວມໃນການດຳເນີນທຸລະກິດກ່ຽວກັບແຮ່ທາດ ຫຼື ໃຫ້ສະມາຊິກໃນຄອບຄົວຂອງຕົນດຳເນີນ ຫຼື ເຂົ້າຮ່ວມໃນກິດຈະການດັ່ງກ່າວ;

7. ຍ້າຍ, ປ່ຽນແປງ ຫຼື ທຳລາຍ ເຂດຫຼັກໝາຍ, ເຂດສຳປະທານ ໂດຍບໍ່ໄດ້ຮັບອະນຸຍາດ;
8. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ແລະ ນຳໃຊ້ມາດຕະການອື່ນທີ່ບໍ່ຖືກຕ້ອງ ຕາມກົດໝາຍ;
9. ມີການກະທຳອື່ນທີ່ເປັນຂໍ້ຫ້າມ ຊຶ່ງໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 74. ຂໍ້ຫ້າມສຳລັບຜູ້ລົງທຶນ**

**ຫ້າມຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ມີການກະທຳ ດັ່ງນີ້:**

1. ຂຸດຄົ້ນ, ສຳຫຼວດ, ຂຸດຄົ້ນ, ປຸງແຕ່ງ ຫຼື ຊື້-ຂາຍແຮ່ທາດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຂຸດຄົ້ນ, ສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງ ນອກແຜນການທີ່ໄດ້ຮັບຮອງເອົາ, ດຳເນີນກິດຈະການ ກ່ຽວກັບແຮ່ທາດຢູ່ນອກເຂດອະນຸຍາດ;
3. ບຸກລຸກ, ທຳລາຍ ຫຼື ສ້າງຄວາມເສັຍຫາຍໃຫ້ແກ່ແຫຼ່ງແຮ່ ແລະ ບໍ່ແຮ່;
4. ຍ້າຍ, ປ່ຽນແປງ ຫຼື ທຳລາຍ ເຄື່ອງໝາຍເຂດອະນຸຍາດ;
5. ນຳເຂົ້າ ແຮງງານ, ພາຫະນະ, ເຄື່ອງຈັກ ແລະ ອຸປະກອນການດຳເນີນທຸລະກິດ ກ່ຽວກັບແຮ່ທາດ ໂດຍບໍ່ໄດ້ຮັບອະນຸຍາດ;
6. ຂຸດຄົ້ນ, ຊື້-ຂາຍ, ເຄື່ອນຍ້າຍ ຫຼື ຂົນສົ່ງ ແຮ່ທາດປະເພດຫວງຫ້າມ;
7. ເຄື່ອນຍ້າຍ ຫຼື ຂົນສົ່ງ ແຮ່ທາດເກີນນ້ຳໜັກ, ເກີນຈຳນວນ, ເກີນຂະໜາດ ຫຼື ບໍ່ຖືກຕ້ອງກັບເອກະສານ;
8. ນຳເອົາໃບອະນຸຍາດຂອງຕົນໄປຄ້ຳປະກັນ ຫຼື ປະກອບຮຸ້ນ, ກູ້ຢືມ, ໃຫ້ເຊົ່າ, ໂອນ, ມອບ, ຂວດຈຳ ຫຼື ຂາຍໃຫ້ບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;
9. ຊື້ຈ້າງ, ໃຫ້ສິນບົນແກ່ພະນັກງານ ແລະ ເຈົ້າໜ້າທີ່ກວດກາບໍ່ແຮ່, ຊື້ຈ້າງປະຊາຊົນ ເພື່ອບຸກລຸກ, ຂຸດຄົ້ນ ຫຼື ຮ່ອນເອົາແຮ່ທາດ ດ້ວຍວິທີການຕ່າງໆ;
10. ທຳລາຍ, ສໍ້ໂກງ, ຍັກຍອກ ຫຼື ຂາຍຕົວຢ່າງແຮ່ທາດ, ເກັບຕົວຢ່າງແຮ່ທາດ ໂດຍບໍ່ໄດ້ຮັບອະນຸຍາດ;
11. ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ, ເຈົ້າໜ້າທີ່ກວດກາບໍ່ແຮ່ ແລະ ປະຊາຊົນ;
12. ລາຍງານບໍ່ຖືກຕາມຄວາມເປັນຈິງ ຫຼື ປອມແປງເອກະສານ ແລະ ຕາປະທັບກ່ຽວກັບແຮ່ທາດ;
13. ມີການກະທຳອື່ນທີ່ເປັນຂໍ້ຫ້າມ ຊຶ່ງໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 75. ຂໍ້ຫ້າມສໍາລັບປະຊາຊົນ**

**ຫ້າມປະຊາຊົນ ມີການກະທໍາ ດັ່ງນີ້:**

1. ທໍາລາຍແຫຼ່ງແຮ່ ດ້ວຍການບຸກລຸກ, ຂຸດຄົ້ນ, ຮ່ອນເອົາແຮ່ທາດ ຫຼື ດ້ວຍການກະທໍາອື່ນທີ່ບໍ່ຖືກຕ້ອງ ຕາມລະບຽບກົດໝາຍ;
2. ຂຸດຄົ້ນ, ຊື້-ຂາຍ, ເຄື່ອນຍ້າຍ ແລະ ເກັບກູ້ແຮ່ທາດ ໂດຍບໍ່ໄດ້ຮັບອະນຸຍາດ;
3. ຮ່ວມມືກັບຜູ້ລົງທຶນ, ພະນັກງານ ແລະ ເຈົ້າໜ້າທີ່ກວດກາບໍ່ແຮ່ ໃນການລັກລອບຂຸດຄົ້ນເອົາແຮ່ທາດ, ບຸກລຸກທໍາລາຍແຮ່ທາດ ຫຼື ບໍ່ແຮ່;
4. ປອມແປງເອກະສານ ແລະ ຕາປະທັບກ່ຽວກັບແຮ່ທາດ;
5. ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ, ເຈົ້າໜ້າທີ່ກວດກາບໍ່ແຮ່ ແລະ ຜູ້ລົງທຶນ;
6. ຊຸກເຊື່ອງ, ທໍາລາຍແຮ່ທາດ ຫຼື ຂາຍຕົວຢ່າງແຮ່ທາດຢ່າງຜິດກົດໝາຍ;
7. ມີການກະທໍາອື່ນທີ່ເປັນຂໍ້ຫ້າມ ຊຶ່ງໄດ້ກໍານົດໄວ້ໃນລະບຽບກົດໝາຍ.

# ພາກທີ IX
# ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 76. ຮູບການແກ້ໄຂຂໍ້ຂັດແຍ່ງ**

**ການແກ້ໄຂຂໍ້ຂັດແຍ່ງ ອາດຈະດໍາເນີນດ້ວຍຮູບການ ດັ່ງນີ້:**

1. ການປະນີປະນອມ ຫຼື ການໄກ່ເກ່ຍ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຕັດສິນຂອງສານປະຊາຊົນ.

**ມາດຕາ 77. ການປະນີປະນອມ ຫລື ການໄກ່ເກ່ຍ**

ໃນກໍລະນີທີ່ເກີດຂໍ້ຂັດແຍ່ງໃນການດໍາເນີນກິດຈະການ ແລະ ທຸລະກິດ ກ່ຽວກັບແຮ່ທາດ ຄູ່ກໍລະນີສາມາດປະນີປະນອມ ຫຼື ໄກ່ເກ່ຍກັນ.

**ມາດຕາ 78. ການແກ້ໄຂທາງດ້ານບໍລິຫານ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບແຮ່ທາດທາງດ້ານບໍລິຫານ ເປັນຕົ້ນ ການດໍາເນີນທຸລະກິດ ກ່ຽວກັບແຮ່ທາດ ໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ຖືກຕ້ອງຕາມເປົ້າໝາຍ, ການບໍ່ເສັຍພັນທະ ແລະ ຄ່າທໍານຽມ ຕາມ

ລະບຽບກົດໝາຍ ແມ່ນ ອົງການຄຸ້ມຄອງ ແລະ ກວດກາວຽກງານແຮ່ທາດທີ່ກ່ຽວຂ້ອງເປັນຜູ້ແກ້ໄຂ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຂັ້ນດຽວກັນ, ຖ້າຄູ່ກໍລະນີຫາກບໍ່ພໍໃຈຕໍ່ຄໍາຕົກລົງແກ້ໄຂນັ້ນແລ້ວ ຜູ້ກ່ຽວກໍມີສິດສະເໜີຕໍ່ອົງການຂັ້ນເທິງຖັດນັ້ນ ເປັນຜູ້ແກ້ໄຂ.

**ມາດຕາ 79. ການແກ້ໄຂໂດຍຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ເມື່ອບໍ່ສາມາດແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານໄດ້ ຄູ່ກໍລະນີມີສິດສະເໜີຕໍ່ຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອທໍາການໄກ່ເກ່ຍ ຫຼື ຕັດສິນ ຕາມກົດໝາຍ.

**ມາດຕາ 80. ການຕັດສິນຂອງສານປະຊາຊົນ**

ຂໍ້ຂັດແຍ່ງທີ່ເກີດຂຶ້ນໃນການດໍາເນີນກິດຈະການ ແລະ ທຸລະກິດ ກ່ຽວກັບແຮ່ທາດ ຊຶ່ງບໍ່ສາມາດຕົກລົງກັນໄດ້ດ້ວຍການໄກ່ເກ່ຍ ແລະ ການແກ້ໄຂນັ້ນແລ້ວ ຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນ ຕາມລະບຽບກົດໝາຍ.

**ມາດຕາ 81. ການແກ້ໄຂທີ່ມີລັກສະນະສາກົນ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການດໍາເນີນກິດຈະການ ແລະ ທຸລະກິດແຮ່ທາດ ລະຫວ່າງຜູ້ລົງທຶນພາຍໃນກັບຜູ້ລົງທຶນຕ່າງປະເທດ ຫຼື ຜູ້ລົງທຶນຕ່າງປະເທດດ້ວຍກັນ ຢູ່ ສປປ ລາວ ຫຼື ລະຫວ່າງຜູ້ລົງທຶນຕ່າງປະເທດ ກັບ ລັດຖະບານ ໃຫ້ນໍາໃຊ້ອົງການແກ້ໄຂຂໍ້ຂັດແຍ່ງພາຍໃນ, ຕ່າງປະເທດ ຫຼື ສາກົນ ຕາມການຕົກລົງຂອງຄູ່ກໍລະນີ.

# ພາກທີ X
# ການຄຸ້ມຄອງ ແລະ ກວດກາວຽກງານແຮ່ທາດ
## ໝວດທີ 1
## ການຄຸ້ມຄອງວຽກງານແຮ່ທາດ

**ມາດຕາ 82 (ປັບປຸງ). ອົງການຄຸ້ມຄອງວຽກງານແຮ່ທາດ**

ລັດຖະບານ ຄຸ້ມຄອງວຽກງານແຮ່ທາດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຮັບຜິດຊອບວຽກງານຊອກຄົ້ນ ແລະ ສໍາຫຼວດ ແລະ ກະຊວງພະລັງງານ ແລະ ບໍ່ແຮ່ ຮັບຜິດຊອບວຽກງານອຸດສາຫະກໍາບໍ່ແຮ່ ເປັນໃຈ

ກາງປະສານສົມທົບ ກັບຂະແໜງການອື່ນ ເປັນຕົ້ນ ຂະແໜງການແຜນການ ແລະ ການລົງທຶນ, ອຸດສາຫະກຳ ແລະ ການຄ້າ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ອົງການຄຸ້ມຄອງວຽກງານແຮ່ທາດ ປະກອບດ້ວຍ:**

1. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງພະລັງງານ ແລະ ບໍ່ແຮ່;
2. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນ;
3. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ເທດສະບານ

ມາດຕາ 83 (ປັບປຸງ). **ສິດ ແລະ ໜ້າທີ່ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງພະລັງງານ ແລະ ບໍ່ແຮ່**

**ກ. ສິດ ແລະ ໜ້າທີ່ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

**ໃນການຄຸ້ມຄອງວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້າ ແລະ ສ້າງແຜນຍຸດທະສາດ, ແຜນນະໂຍບາຍ, ລະບຽບກົດໝາຍ ແລະ ຜັນຂະຫຍາຍ ແນວທາງນະໂຍບາຍໃຫ້ກາຍເປັນແຜນງານ, ໂຄງການລະອຽດ ກ່ຽວກັບການຂຸດຄົ້ນ, ການສຳຫຼວດແລະ ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ເບື້ອງຕົ້ນ ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ດຳເນີນການຂຸດຄົ້ນ, ສຳຫຼວດທໍລະນີສາດຂັ້ນພື້ນຖານ, ວາງແຜນ ແລະ ຈັດສັນການຄຸ້ມຄອງຊັບພະຍາກອນແຮ່ທາດ ໃນຂອບເຂດທົ່ວປະເທດ;
3. ໂຄສະນາ ເຜີຍແຜ່, ຊີ້ນຳ, ຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບແຮ່ທາດ ໂດຍສະເພາະຂັ້ນຕອນການຂຸດຄົ້ນ, ສຳຫຼວດ ແລະ ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ, ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ແລະ ເງື່ອນໄຂຂອງໃບອະນຸຍາດດ້ານສິ່ງແວດລ້ອມ;
4. ຄົ້ນຄວ້າວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ສ້າງຕາໜ່າງສູນສະຖິຕິ-ຂໍ້ມູນຂ່າວສານ ກ່ຽວກັບການຂຸດຄົ້ນ ແລະ ສຳຫຼວດ ແຮ່ທາດ;
5. ສ້າງຕັ້ງຄະນະກຳມະການຕີລາຄາ ແລະ ຮັບຮອງປະລິມານ ສະສົມແຮ່ທາດ;
6. ເຂົ້າຮ່ວມການເຈລະຈາ ແລະ ການເຊັນສັນຍາສຳປະທານຂຸດຄົ້ນ ແລະ ສຳຫຼວດ ແຮ່ທາດ ຕາມການມອບໝາຍ ຂອງລັດຖະບານ;

7. ອອກ ແລະ ຕໍ່ອາຍຸໃບອະນຸຍາດຂຸດຄົ້ນ, ສຳຫຼວດ, ໃບອະນຸຍາດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ ໃຫ້ຜູ້ລົງທຶນ;
8. ພິຈາລະນາໂຈະ, ຖອນ ຫຼື ຍົກເລີກໃບອະນຸຍາດ ຂຸດຄົ້ນ, ສຳຫຼວດ ແລະ ໃບອະນຸຍາດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ ຂອງຜູ້ລົງທຶນທີ່ລະເມີດລະບຽບກົດໝາຍ;
9. ສະເໜີລັດຖະບານ ເພື່ອພິຈາລະນາ ໂຈະ ຫຼື ຍົກເລີກສັນຍາສຳປະທານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ທີ່ຜູ້ລົງທຶນລະເມີດ;
10. ຄຸ້ມຄອງ, ຕິດຕາມ ການຂຸດຄົ້ນ, ສຳຫຼວດ ແລະ ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ເບື້ອງຕົ້ນ;
11. ກໍ່ສ້າງ, ບຳລຸງ, ຍົກລະດັບວິຊາການ ດ້ານທໍລະນີສາດ ແລະ ແຮ່ທາດ ໃຫ້ແກ່ພະນັກງານ;
12. ຢັ້ງຢືນທາງດ້ານວິຊາການ ກ່ຽວກັບການອະນຸຍາດສິ່ງຕົວຢ່າງແຮ່ທາດ ອອກໄປວິໄຈຕາມລະບຽບການ;
13. ອອກວາລະສານກ່ຽວກັບວຽກງານແຮ່ທາດ ແລະ ຂຶ້ນທະບຽນກ່ຽວກັບເຂດຂຸດຄົ້ນ ແລະ ສຳຫຼວດແຮ່ທາດ;
14. ປະສານສົມທົບກັບບັນດາຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອປົກປັກຮັກສາ, ສົ່ງເສີມ, ຄຸ້ມຄອງ ກິດຈະການ ແລະ ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບວຽກງານແຮ່ທາດ;
15. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານແຮ່ທາດ;
16. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານຄຸ້ມຄອງແຮ່ທາດ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
17. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ຂ. ສິດ ແລະ ໜ້າທີ່ຂອງກະຊວງພະລັງງານ ແລະ ບໍ່ແຮ່**

**ໃນການຄຸ້ມຄອງວຽກງານອຸດສາຫະກຳບໍ່ແຮ່ ກະຊວງພະລັງງານ ແລະ ບໍ່ແຮ່ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້າ ແລະ ສ້າງແຜນຍຸດທະສາດ, ແຜນນະໂຍບາຍ, ລະບຽບກົດໝາຍ ແລະ ຜັນຂະຫຍາຍ ແນວທາງໃຫ້ກາຍເປັນແຜນງານ, ໂຄງການລະອຽດ ເພື່ອເຮັດໃຫ້ການຂຸດຄົ້ນ ແລະ ພັດທະນາບໍ່ແຮ່ ໃຫ້ເປັນການພັດທະນາແບບຍືນຍົງ ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ຄົ້ນຄວ້າ ແລະ ອອກລະບຽບການ ກ່ຽວກັບການຄຸ້ມຄອງອຸດສາຫະກຳບໍ່ແຮ່;

3. ໂຄສະນາ ເຜີຍແຜ່, ຊີ້ນຳ, ຕິດຕາມການຈັດຕັ້ງປະຕິບັດ ລະບຽບກົດໝາຍ ກ່ຽວກັບແຮ່ທາດ;
4. ຄົ້ນຄວ້າວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ສ້າງຕາໜ່າງສູນສະຖິຕິ-ຂໍ້ມູນຂ່າວສານ ກ່ຽວກັບອຸດສາຫະກຳບໍ່ແຮ່;
5. ສ້າງຕັ້ງຄະນະກຳມະການ ເພື່ອສຶກສາ, ກວດຜ່ານ ແລະ ຮັບຮອງເອົາບົດລາຍງານການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກລະອຽດ;
6. ຄົ້ນຄວ້າ ການແບ່ງປັນຜົນປະໂຫຍດຂອງລັດ ຈາກການດຳເນີນວຽກງານອຸດສາຫະກຳບໍ່ແຮ່ ເພື່ອນຳສະເໜີ ລັດຖະບານ ພິຈາລະນາ ພ້ອມທັງຕິດຕາມການປະຕິບັດພັນທະດັ່ງກ່າວ ຂອງຜູ້ລົງທຶນ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ;
7. ເຂົ້າຮ່ວມເຈລະຈາ ແລະ ເຊັນສັນຍາຂຸດຄົ້ນ ແລະ ພັດທະນາບໍ່ແຮ່ ຕາມການມອບໝາຍຂອງລັດຖະບານ;
8. ອອກ ແລະ ຕໍ່ອາຍຸໃບອະນຸຍາດ ຂຸດຄົ້ນ, ສ້າງຕັ້ງໂຮງງານ ປຸງແຕ່ງ ແລະ ຫຼໍ່ຫຼອມແຮ່; ໃບຢັ້ງຢືນ ການຊື້-ຂາຍ, ເຄື່ອນຍ້າຍແຮ່;
9. ສົມທົບກັບຂະແໜງການອື່ນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສຶກສາ, ຕິດຕາມການປະຕິບັດພັນທະທາງດ້ານການເງິນຂອງຜູ້ລົງທຶນ;
10. ພິຈາລະນາ ໂຈະ, ຖອນ ຫຼື ຍົກເລີກ ໃບອະນຸຍາດ ຂຸດຄົ້ນ, ສ້າງຕັ້ງໂຮງງານປຸງແຕ່ງ ແລະ ຫຼໍ່ຫຼອມແຮ່; ໃບຢັ້ງຢືນການຊື້-ຂາຍ ແລະ ເຄື່ອນຍ້າຍແຮ່ ທີ່ລະເມີດລະບຽບກົດໝາຍ;
11. ສະເໜີລັດຖະບານ ເພື່ອພິຈາລະນາ ໂຈະ ຫຼື ຍົກເລີກສັນຍາສຳປະທານຂຸດຄົ້ນແຮ່ທາດທີ່ຜູ້ດຳເນີນທຸລະກິດອຸດສາຫະກຳບໍ່ແຮ່ລະເມີດ;
12. ຄຸ້ມຄອງ, ຕິດຕາມການຂຸດຄົ້ນ, ປຸງແຕ່ງ, ຫຼໍ່ຫຼອມ ແລະ ການ ຊື້-ຂາຍ ແຮ່;
13. ກໍ່ສ້າງ, ບຳລຸງ, ຍົກລະດັບພະນັກງານ ແລະ ກຳມະກອນ ທາງດ້ານອຸດສາຫະກຳ ບໍ່ແຮ່;
14. ຢັ້ງຢືນທາງດ້ານວິຊາການກ່ຽວກັບການສົ່ງອອກ ຫຼື ນຳເຂົ້າແຮ່ທາດ, ພາຫະນະ, ອຸປະກອນກົນຈັກຮັບໃຊ້ການດຳເນີນທຸລະກິດ ກ່ຽວກັບອຸດສາຫະກຳບໍ່ແຮ່ ລວມທັງການອະນຸຍາດສົ່ງຕົວຢ່າງແຮ່ທາດ ເພື່ອຄັດເລືອກເຕັກໂນໂລຊີອອກແບບໂຮງງານ;
15. ອອກວາລະສານ ແລະ ຂຶ້ນທະບຽນເຂດຂຸດຄົ້ນບໍ່ແຮ່;
16. ປະສານສົມທົບກັບບັນດາຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອປົກປັກຮັກສາ, ສົ່ງເສີມ, ຄຸ້ມຄອງກິດຈະການ ແລະ ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບອຸດສາຫະກຳບໍ່ແຮ່;
17. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານອຸດສາຫະກຳບໍ່ແຮ່;

18. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານອຸດສາຫະກຳບໍ່ແຮ່ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
19. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 84 (ປັບປຸງ). ສິດ ແລະ ໜ້າທີ່ ຂອງ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພະແນກ ພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນ**

**ກ. ສິດ ແລະ ໜ້າທີ່ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນ ໃນການຄຸ້ມຄອງວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ, ຄຳແນະນຳ ແລະ ລະບຽບການຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ອົງການປົກຄອງແຂວງ, ນະຄອນ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ ຊັບພະຍາກອນແຮ່ທາດ;
2. ໂຄສະນາ, ເຜີຍແຜ່ ລະບຽບກົດໝາຍກ່ຽວກັບແຮ່ທາດ;
3. ຂຶ້ນບັນຊີຊັບພະຍາກອນແຮ່ທາດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ, ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານ ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ;
4. ຄົ້ນຄວ້າປະກອບຄຳເຫັນທາງດ້ານວິຊາການ ກ່ຽວກັບວຽກງານແຮ່ທາດ ແລ້ວສະເໜີໃຫ້ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງແຂວງ, ນະຄອນ ພິຈາລະນາ;
5. ຕິດຕາມ ແລະ ປະເມີນຜົນກ່ຽວກັບການດຳເນີນກິດຈະການ ແລະ ທຸລະກິດ ກ່ຽວກັບວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ລວມທັງການນຳໃຊ້ທຶນພັດທະນາຊຸມຊົນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສົ່ງເສີມ, ຄຸ້ມຄອງຊັບພະຍາກອນແຮ່ທາດ ແລະ ຕິດຕາມການດຳເນີນທຸລະກິດ ກ່ຽວກັບວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ;
7. ຢັ້ງຢືນການປະຕິບັດກິດຈະການກ່ຽວກັບວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ແລ້ວລາຍງານໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງແຂວງ, ນະຄອນ;
8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ຕາມການມອບໝາຍຂອງຂັ້ນເທິງ;

9. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງການປະຕິບັດ ກ່ຽວກັບວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງແຂວງ, ນະຄອນ ຢ່າງເປັນ ປົກກະຕິ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ຂ. ສິດ ແລະ ໜ້າທີ່ ຂອງພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນ**

**ໃນການຄຸ້ມຄອງວຽກງານອຸດສາຫະກຳບໍ່ແຮ່ ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ, ຄຳແນະນຳ ແລະ ລະບຽບການຂອງກະຊວງພະລັງງານ ແລະ ບໍ່ແຮ່, ອົງການປົກຄອງແຂວງ, ນະຄອນ ກ່ຽວກັບການຄຸ້ມຄອງ, ນຳໃຊ້ແຮ່;
2. ໂຄສະນາ, ເຜີຍແຜ່ ລະບຽບກົດໝາຍ ກ່ຽວກັບແຮ່ທາດ;
3. ຂຶ້ນບັນຊີບໍ່ແຮ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ, ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງ ປະຕິບັດວຽກງານຂອງຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ເທດສະບານ;
4. ຄົ້ນຄວ້າປະກອບຄຳເຫັນທາງດ້ານວິຊາການ ກ່ຽວກັບບໍ່ແຮ່ ແລ້ວສະເໜີໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ອົງການປົກຄອງ ແຂວງ, ນະຄອນ ພິຈາລະນາ;
5. ອອກ ແລະ ຕໍ່ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບແຮ່ທາດສະເພາະ ຕາມລະບຽບການ;
6. ສະເໜີຕໍ່ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອພິຈາລະນາໂຈະ ຫຼື ລົບລ້າງການດຳເນີນທຸລະກິດກ່ຽວກັບແຮ່ທາດສະເພາະ;
7. ຕິດຕາມ ແລະ ປະເມີນຜົນ ກ່ຽວກັບການດຳເນີນກິດຈະການ ແລະ ທຸລະກິດກ່ຽວກັບອຸດສາຫະກຳບໍ່ແຮ່ ລວມທັງການນຳໃຊ້ທຶນພັດທະນາຊຸມຊົນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
8. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສົ່ງເສີມ, ຄຸ້ມຄອງ ແລະ ຕິດຕາມການດຳເນີນທຸລະກິດ ກ່ຽວກັບອຸດສາຫະກຳບໍ່ແຮ່;
9. ຍັ້ງຢືນການປະຕິບັດວຽກງານ ກ່ຽວກັບອຸດສາຫະກຳບໍ່ແຮ່ ແລ້ວລາຍງານໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ອົງການປົກຄອງແຂວງ, ນະຄອນ;
10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານອຸດສາຫະກຳບໍ່ແຮ່ ຕາມການມອບໝາຍຂອງຂັ້ນເທິງ;
11. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານ ກ່ຽວກັບອຸດສາຫະກຳບໍ່ແຮ່ ໃຫ້ກະຊວງ ພະລັງງານ ແລະ ບໍ່ແຮ່ ແລະ ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;

12. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 85 (ປັບປຸງ). **ສິດ ແລະ ໜ້າທີ່ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ເທດສະບານ**

**ກ. ສິດ ແລະ ໜ້າທີ່ຂອງຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ**

**ໃນການຄຸ້ມຄອງວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳ ກ່ຽວກັບວຽກງານຄຸ້ມຄອງຊັບພະຍາກອນແຮ່ທາດ ແລະ ການຂຸດຄົ້ນ ແລະ ສຳຫຼວດແຮ່ທາດ;
2. ເຜີຍແຜ່ລະບຽບກົດໝາຍ ກ່ຽວກັບແຮ່ທາດ;
3. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການດຳເນີນທຸລະກິດ ກ່ຽວກັບວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ລວມທັງຕິດຕາມການເຄື່ອນໄຫວກິດຈະການ ກ່ຽວກັບວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ສະຫຼຸບ, ລາຍງານການປະຕິບັດວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນ ແລະ ອົງການປົກຄອງ ເມືອງ, ເທດສະບານ ຢ່າງເປັນປົກກະຕິ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ຂ. ສິດ ແລະ ໜ້າທີ່ຂອງຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ເທດສະບານ**

**ໃນການຄຸ້ມຄອງວຽກງານອຸດສາຫະກຳບໍ່ແຮ່ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳ ກ່ຽວກັບວຽກງານອຸດສາຫະກຳບໍ່ແຮ່;
2. ເຜີຍແຜ່ລະບຽບກົດໝາຍ ກ່ຽວກັບແຮ່ທາດ;
3. ອອກໃບອະນຸຍາດ ແລະ ຂຶ້ນທະບຽນການຂຸດຄົ້ນແຮ່ທາດ ແບບຫັດຖະກຳ ແລະ ແກ້ວປະເສີດແບບຫັດຖະກຳ ທີ່ບໍ່ເປັນທຸລະກິດ ຕາມການຕົກລົງເຫັນດີຂອງພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນ;

4. ພິຈາລະນາໂຈະ, ຖອນ ຫຼື ລຶບລ້າງ ໃບອະນຸຍາດ ແລະ ຂຶ້ນທະບຽນການຂຸດຄົ້ນແຮ່ທາດແບບຫັດຖະກໍາ ແລະ ແກ້ວປະເສີດແບບຫັດຖະກໍາທີ່ບໍ່ເປັນທຸລະກິດ ຕາມການຕົກລົງເຫັນດີຂອງພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນ;
5. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອອໍານວຍຄວາມສະດວກ ໃຫ້ແກ່ການດໍາເນີນທຸລະກິດ ກ່ຽວກັບອຸດສາຫະກໍາບໍ່ແຮ່ ລວມທັງຕິດຕາມການເຄື່ອນໄຫວ ກ່ຽວກັບອຸດສາຫະກໍາບໍ່ແຮ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ສະຫຼຸບ, ລາຍງານການປະຕິບັດວຽກງານອຸດສາຫະກໍາບໍ່ແຮ່ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນ ແລະ ອົງການປົກຄອງເມືອງ, ເທດສະບານ ຢ່າງເປັນປົກກະຕິ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 86 (ປັບປຸງ). ສິດ ແລະ ໜ້າທີ່ຂອງຂະແໜງການ ແລະ ພາກສ່ວນອື່ນ**

ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ຄຸ້ມຄອງ, ປົກປັກຮັກສາແຮ່ທາດ ແລະ ຊັບພະຍາກອນແຮ່ທາດ ຕາມພາລະບົດບາດຂອງຕົນ.

ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບໃນການຄຸ້ມຄອງ, ຕິດຕາມກິດຈະການ ແລະ ການດໍາເນີນທຸລະກິດ ກ່ຽວກັບແຮ່ທາດ, ຮັບປະກັນສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າທີ່ຕັ້ງພູມລໍາເນົາຢູ່ໃນເຂດແຮ່ທາດ, ປົກປັກຮັກສາຊັບພະຍາກອນແຮ່ທາດ ແລະ ສະຫຼຸບ, ລາຍງານກ່ຽວກັບຈຸດປາກົດຕົວຂອງແຮ່ທາດ ໃຫ້ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ/ຫຼື ຂະແໜງການພະລັງງານ ແລະ ບໍ່ແຮ່, ອໍານວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ວຽກງານແຮ່ທາດ ລວມທັງຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ພາຍໃນຂອບເຂດທ້ອງຖິ່ນຂອງຕົນ.

## ໝວດທີ 2
## ການກວດກາວຽກງານແຮ່ທາດ

**ມາດຕາ 87 (ປັບປຸງ). ອົງການກວດກາວຽກງານແຮ່ທາດ**

ອົງການກວດກາວຽກງານແຮ່ທາດ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານແຮ່ທາດ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 82 ຂອງກົດໝາຍສະບັບນີ້.

**ມາດຕາ 88 (ປັບປຸງ). ປະເພດການກວດກາ**

**ການກວດກາມີ ສອງ ປະເພດ ດັ່ງນີ້:**

1. ການກວດກາພາຍໃນ;
2. ການກວດກາພາຍນອກ.

ການກວດກາພາຍໃນ ແມ່ນ ການກວດກາຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການພະລັງງານ ແລະ ບໍ່ແຮ່.

ການກວດກາພາຍນອກ ແມ່ນ ການກວດກາຂອງສະພາແຫ່ງຊາດ, ຂອງອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ, ຂອງອົງການກວດສອບແຫ່ງລັດ ແລະ ການຕິດຕາມກວດກາຂອງປະຊາຊົນ ຊຶ່ງມີຈຸດປະສົງກວດກາການປະຕິບັດໜ້າທີ່ຂອງອົງການຄຸ້ມຄອງ ແລະ ກວດກາວຽກງານແຮ່ທາດ ເພື່ອໃຫ້ມີຄວາມເຂັ້ມແຂງ, ໂປ່ງໃສ ແລະ ຍຸຕິທຳ.

ນອກຈາກນີ້ ເມື່ອພົບເຫັນ ຫຼື ມີປາກົດການທີ່ລະເມີດລະບຽບກົດໝາຍ ຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການພະລັງງານ ແລະ ບໍ່ແຮ່, ພະນັກງານ ແລະ ເຈົ້າໜ້າທີ່ກວດກາວຽກງານແຮ່ທາດແລ້ວ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກໍມີສິດສະເໜີຕໍ່ອົງການທີ່ກ່ຽວຂ້ອງ ເພື່ອດຳເນີນການຕໍ່ເປົ້າໝາຍດັ່ງກ່າວ.

**ມາດຕາ 89 (ປັບປຸງ). ເນື້ອໃນການກວດກາ**

ການກວດກາວຽກງານແຮ່ທາດ ແມ່ນ ການເຄື່ອນໄຫວ ເພື່ອຮັບປະກັນໃຫ້ກິດຈະການ ແລະ ທຸລະກິດ ກ່ຽວກັບແຮ່ທາດ ດຳເນີນໄປຢ່າງຖືກຕ້ອງຕາມລະບຽບກົດໝາຍ ແລະ ມີປະສິດທິຜົນ, ຮັບປະກັນທາງດ້ານເຕັກນິກ, ປົກປັກຮັກສາຊັບພະຍາກອນແຮ່ທາດ, ສິ່ງແວດລ້ອມ, ຄວາມປອດໄພ, ສຸຂະພາບຂອງຜູ້ອອກແຮງງານ ແລະ ຊຸມຊົນຢູ່ໃນເຂດໂຄງການ.

**ການກວດກາວຽກງານແຮ່ທາດ ມີເນື້ອໃນ ດັ່ງນີ້:**

**ກ. ການກວດກາວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ:**

1. ການຈັດຕັ້ງປະຕິບັດສັນຍາ ແລະ ລະບຽບກົດໝາຍກ່ຽວກັບແຮ່ທາດ;
2. ການປະຕິບັດຂັ້ນຕອນຂອງການດຳເນີນກິດຈະການຂຸດຄົ້ນ ແລະ ສຳຫຼວດ ແຮ່ທາດ;
3. ການປະຕິບັດກຳນົດເວລາ ແລະ ແຜນວຽກຂອງການຂຸດຄົ້ນ, ສຳຫຼວດ, ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ;
4. ການປະຕິບັດມາດຕະການຄວາມປອດໄພ ແລະ ການຈຳກັດຜົນກະທົບຕໍ່ສິ່ງແວດລ້ອມໃນໄລຍະຂຸດຄົ້ນ, ສຳຫຼວດ ແລະ ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ;

5. ການຕິດຕາມການເຄື່ອນໄຫວຂອງການຈັດຕັ້ງ, ພະນັກງານ, ເຈົ້າໜ້າທີ່ກວດກາ ກ່ຽວກັບວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ, ການປົກປັກຮັກສາ ແລະ ການນຳໃຊ້ແຮ່ທາດ ລວມທັງການກວດກາການດຳເນີນທຸລະກິດ;
6. ການໃຊ້ແທນຄ່າເສັຍຫາຍທີ່ເນື່ອງຈາກຜົນກະທົບຕໍ່ສິ່ງແວດລ້ອມ, ຊີວິດ, ສຸຂະພາບ ແລະ ຊັບສິນຂອງປະຊາຊົນ ໃນໄລຍະດຳເນີນການຂຸດຄົ້ນ ແລະ ສຳຫຼວດແຮ່ທາດ;
7. ລະບົບການເງິນ, ສະຫວັດດີການສັງຄົມ ແລະ ນະໂຍບາຍອື່ນ.

**ຂ. ການກວດກາວຽກງານອຸດສາຫະກຳບໍ່ແຮ່:**

1. ການຈັດຕັ້ງປະຕິບັດສັນຍາ ແລະ ລະບຽບກົດໝາຍກ່ຽວກັບແຮ່ທາດ;
2. ການປະຕິບັດຂັ້ນຕອນຂອງການດຳເນີນກິດຈະການກ່ຽວກັບວຽກງານອຸດສາຫະກຳບໍ່ແຮ່;
3. ການປະຕິບັດກຳນົດເວລາ ແລະ ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກລະອຽດ, ການກໍ່ສ້າງ, ການຂຸດຄົ້ນ, ການປຸງແຕ່ງ ແລະ ຫຼໍ່ຫຼອມແຮ່;
4. ການປະຕິບັດມາດຕະການຄວາມປອດໄພ ແລະ ການຈຳກັດຜົນກະທົບຕໍ່ສິ່ງແວດລ້ອມ ໃນໄລຍະດຳເນີນວຽກງານອຸດສາຫະກຳ-ບໍ່ແຮ່;
5. ການຕິດຕາມການເຄື່ອນໄຫວຂອງການຈັດຕັ້ງ, ພະນັກງານ, ເຈົ້າໜ້າທີ່ກວດກາກ່ຽວກັບວຽກງານອຸດສາຫະກຳບໍ່ແຮ່, ການກໍ່ສ້າງ, ການຂຸດຄົ້ນ, ການປຸງແຕ່ງ, ການຊື້-ຂາຍແຮ່ທາດ ແລະ ການນຳໃຊ້ແຮ່ທາດ ລວມທັງການກວດກາການດຳເນີນກິດຈະການ ແລະ ທຸລະກິດກ່ຽວກັບແຮ່ທາດ;
6. ການໃຊ້ແທນຄ່າເສັຍຫາຍທີ່ເນື່ອງຈາກຜົນກະທົບຕໍ່ສິ່ງແວດລ້ອມ, ຊີວິດ, ສຸຂະພາບ ແລະ ຊັບສິນຂອງປະຊາຊົນ ໃນໄລຍະດຳເນີນວຽກງານອຸດສາຫະກຳບໍ່ແຮ່;
7. ລະບົບການເງິນ, ສະຫວັດດີການສັງຄົມ ແລະ ນະໂຍບາຍອື່ນ...

ມາດຕາ 90 (ປັບປຸງ). **ສິດ ແລະ ໜ້າທີ່ຂອງອົງການກວດກາ**

**ອົງການກວດກາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

**ກ. ສິດ ແລະ ໜ້າທີ່ຂອງອົງການກວດກາວຽກງານຂຸດຄົ້ນ ແລະ ສຳຫລວດແຮ່ທາດ:**

1. ກວດກາການຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບແຮ່ທາດ;
2. ກວດກາກິດຈະການ ແລະ ທຸລະກິດກ່ຽວກັບການຂຸດຄົ້ນ ແລະ ສຳຫຼວດ ລວມທັງການບໍລິການທຸລະກິດກ່ຽວກັບແຮ່ທາດ;
3. ສະເໜີໃຫ້ອົງການທີ່ກ່ຽວຂ້ອງອອກຄຳສັ່ງໂຈະ ຫຼື ລົບລ້າງກິດຈະການ ກ່ຽວກັບວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ຫຼື ລົງວິໄນຕໍ່ພະນັກງານ ຫຼື ເຈົ້າໜ້າທີ່ກວດກາວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດທີ່ລະເມີດລະບຽບກົດໝາຍ;
4. ສັງລວມ ແລະ ກວດກາບົດສະຫຼຸບຜົນຂອງການວິໄຈຕົວຢ່າງແຮ່ທາດຕ່າງໆ;

5. ພົວພັນ, ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງກ່ຽວກັບການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຕົນ;
6. ສະຫຼຸບ, ລາຍງານຜົນຂອງການປະຕິບັດວຽກງານກວດກາແຕ່ລະໄລຍະ ໃຫ້ຂັ້ນເທິງຖັດຕົນຢ່າງເປັນປົກກະຕິ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ຂ. ສິດ ແລະ ໜ້າທີ່ຂອງອົງການກວດກາວຽກງານອຸດສາຫະກຳບໍ່ແຮ່:**

1. ກວດກາການຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບແຮ່ທາດ;
2. ກວດກາກິດຈະການ ແລະ ທຸລະກິດກ່ຽວກັບວຽກງານອຸດສາຫະກຳບໍ່ແຮ່ ເຊັ່ນ ການຂຸດຄົ້ນ, ການປຸງແຕ່ງ ແລະ ຫຼໍ່ຫຼອມແຮ່ ລວມທັງການບໍລິການທຸລະກິດກ່ຽວກັບແຮ່ທາດ;
3. ສະເໜີໃຫ້ອົງການທີ່ກ່ຽວຂ້ອງອອກຄຳສັ່ງໂຈະ ຫຼື ລົບລ້າງກິດຈະການ ກ່ຽວກັບວຽກງານອຸດສາຫະກຳບໍ່ແຮ່ ຫຼື ລົງວິໄນຕໍ່ພະນັກງານ ຫຼື ເຈົ້າໜ້າທີ່ກວດກາວຽກງານອຸດສາຫະກຳບໍ່ແຮ່ ທີ່ລະເມີດລະບຽບກົດໝາຍ;
4. ສັງລວມ ແລະ ກວດກາບົດສະຫຼຸບຜົນຂອງການວິໄຈຕົວຢ່າງແຮ່ທາດ ເພື່ອຄັດເລືອກເຕັກໂນໂລຊີອອກແບບໂຮງງານປຸງແຕ່ງແຮ່ທາດ;
5. ພົວພັນ, ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງກ່ຽວກັບການຈັດຕັ້ງປະຕິບັດ ສິດ ແລະ ໜ້າທີ່ຂອງຕົນ;
6. ສະຫຼຸບ, ລາຍງານຜົນຂອງການປະຕິບັດວຽກງານກວດກາແຕ່ລະໄລຍະ ໃຫ້ຂັ້ນເທິງຖັດຕົນຢ່າງເປັນປົກກະຕິ;
7. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 91 (ປັບປຸງ). **ເຈົ້າໜ້າທີ່ກວດກາວຽກງານແຮ່ທາດ**

ກ. ເຈົ້າໜ້າທີ່ກວດກາວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ:

**ເຈົ້າໜ້າທີ່ກວດກາວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ແມ່ນ ພະນັກງານຂອງລັດທີ່ສັງກັດ ຢູ່ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊຶ່ງ ມີ ສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:**

1. ເຄື່ອນໄຫວລາດຕະເວນ ແລະ ກວດກາຕາມເປົ້າໝາຍຕ່າງໆ ເຊັ່ນ ສະຖານທີ່ດຳເນີນກິດຈະການ ກ່ຽວກັບວຽກງານຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ແລະ ສະຖານທີ່ອື່ນ ທີ່ເຫັນວ່າມີຄວາມຈຳເປັນ;
2. ຮັບ, ບັນທຶກການແຈ້ງຄວາມ, ທວງເອົາ ແລະ ກວດກາເອກະສານທີ່ເຫັນວ່າມີການລະເມີດລະບຽບກົດໝາຍກ່ຽວກັບແຮ່ທາດ;

3. ພົວພັນ ແລະ ປະສານສົມທົບກັບການຈັດຕັ້ງອື່ນທີ່ກ່ຽວຂ້ອງ ລວມທັງອົງການປົກຄອງທ້ອງຖິ່ນ ກ່ຽວກັບການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ;
4. ດຳເນີນການກວດກາຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນມາດຕາ 89 ຂໍ້ (ກ) ຂອງກົດໝາຍ ສະບັບນີ້;
5. ສະຫຼຸບ, ລາຍງານການເຄື່ອນໄຫວກ່ຽວກັບການກວດກາວຽກງານຊອກຄົ້ນ ແລະ ສຳຫຼວດແຮ່ທາດ ໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມທີ່ຕົນສັງກັດຢູ່ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຂອງຕົນ.

**ຂ. ເຈົ້າໜ້າທີ່ກວດກາວຽກງານອຸດສາຫະກຳບໍ່ແຮ່:**

**ເຈົ້າໜ້າທີ່ກວດກາວຽກງານອຸດສາຫະກຳບໍ່ແຮ່ ແມ່ນ ພະນັກງານຂອງລັດ ທີ່ສັງກັດຢູ່ຂະແໜງການພະລັງງານ ແລະ ບໍ່ແຮ່ ຊຶ່ງມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:**

1. ເຄື່ອນໄຫວລາດຕະເວນ ແລະ ກວດກາຕາມເປົ້າໝາຍຕ່າງໆ ເຊັ່ນ ສະຖານທີ່ດຳເນີນກິດຈະການ ກ່ຽວກັບການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກລະອຽດ, ການກໍ່ສ້າງ, ການຂຸດຄົ້ນ, ເສັ້ນທາງການຂົນສົ່ງ, ລານ, ສາງເກັບມ້ຽນແຮ່, ໂຮງງານປຸງແຕ່ງ ແລະ ຫຼໍ່ຫຼອມແຮ່ ແລະ ສະຖານທີ່ອື່ນ ທີ່ເຫັນວ່າມີຄວາມຈຳເປັນ;
2. ຮັບ, ບັນທຶກການແຈ້ງຄວາມ, ທວງເອົາ ແລະ ກວດກາເອກະສານທີ່ເຫັນວ່າມີການລະເມີດລະບຽບກົດໝາຍກ່ຽວກັບແຮ່ທາດ;
3. ພົວພັນ ແລະ ປະສານສົມທົບກັບການຈັດຕັ້ງອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກ່ຽວກັບການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ.
4. ດຳເນີນການກວດກາຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນມາດຕາ 89 ຂໍ້ (ຂ) ຂອງກົດໝາຍສະບັບນີ້;
5. ສະຫຼຸບ, ລາຍງານການເຄື່ອນໄຫວ ກ່ຽວກັບການກວດກາວຽກງານອຸດສາຫະກຳບໍ່ແຮ່ ໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ທີ່ຕົນສັງກັດຢູ່ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຂອງຕົນ.

ມາດຕາ 92 (ປັບປຸງ). **ຮູບການການກວດກາ**

**ການກວດກາວຽກງານແຮ່ທາດ ມີ ສາມ ຮູບການ ດັ່ງນີ້:**

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ມີລັກສະນະເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍ ສອງ ຄັ້ງຕໍ່ປີ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາເມື່ອຫາກເຫັນວ່າມີຄວາມຈຳເປັນ ໂດຍມີການແຈ້ງໃຫ້ຜູ້ລົງທຶນ ຮູ້ລ່ວງໜ້າຢ່າງໜ້ອຍ ຊາວສີ່ ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ລົງທຶນຮູ້ລ່ວງໜ້າ.

ການກວດກາ ສາມາດດຳເນີນດ້ວຍການກວດກາດ້ານເອກະສານ ແລະ ການປະຕິບັດຕົວຈິງຢູ່ສະຖານທີ່ປະຕິບັດງານ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 93. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນໃນການຄຸ້ມຄອງ, ການປົກປັກຮັກສາຊັບພະຍາກອນແຮ່ທາດ ແລະ ການດຳເນີນທຸລະກິດກ່ຽວກັບແຮ່ທາດຢ່າງມີປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບການ.

### ມາດຕາ 94. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ມາດຕະການທາງແພ່ງ ຫຼື ຖືກດຳເນີນຄະດີ ຕາມກົດໝາຍແລ້ວແຕ່ກໍລະນີເບົາ ຫຼື ໜັກ.

### ມາດຕາ 95. ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ໃນສະຖານເບົາ ຫຼື ເປັນຄັ້ງທຳອິດ ເຊັ່ນ ລາຍງານກ່ຽວກັບທຸລະກິດແຮ່ທາດບໍ່ຖືກຕາມກຳນົດເວລາ, ປະຕິບັດວຽກງານຊັກຊ້າ, ບໍ່ຖືກຕ້ອງຕາມແຜນການເຕັກນິກ, ການຂຸດຄົ້ນແຮ່ທາດແບບຫັດຖະກຳ ໂດຍບໍ່ໄດ້ຮັບອະນຸຍາດ ຊຶ່ງກໍ່ຄວາມເສັຍຫາຍທີ່ມີມູນຄ່າ ຕ່ຳກວ່າ ໜຶ່ງລ້ານ ກີບ ແຕ່ມີຄວາມຈິງໃຈລາຍງານ ກໍຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

**ມາດຕາ 96 (ປັບປຸງ). ມາດຕະການທາງວິໄນ**

ພະນັກງານ, ເຈົ້າໜ້າທີ່ກວດກາວຽກງານແຮ່ທາດ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບແຮ່ທາດ ແລະ ຂໍ້ຫ້າມທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍເຫຍ ທີ່ມີມູນຄ່າ ແຕ່ ໜຶ່ງລ້ານກີບ ລົງມາ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກ ຈາກຄວາມຜິດຂອງຕົນ ກໍຈະຖືກລົງວິໄນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຕິຕຽນ, ກ່າວເຕືອນຄວາມຜິດ ໂດຍບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບຜິດຊອບໜ້າທີ່ອື່ນ ທີ່ມີຕຳແໜ່ງຕໍ່າກວ່າເກົ່າ;
4. ໃຫ້ອອກຈາກລັດຖະການໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ຖືກລົງວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາ ໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**ມາດຕາ 97. ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດລະບຽບກົດໝາຍກ່ຽວກັບແຮ່ທາດ ແລະ ຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍ ທີ່ມີມູນຄ່າເກີນກວ່າ ໜຶ່ງລ້ານ ກີບ ກໍຈະຖືກປັບໃໝເທົ່າຕົວຂອງມູນຄ່າຄວາມເສຍຫາຍຂອງແຮ່ທາດ, ແຮ່ເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ຕາມລາຄາທ້ອງຕະຫຼາດ.

ໃນກໍລະນີທີ່ມີການລະເມີດເປັນຄັ້ງທີສອງ ຫຼື ເປັນອາຈິນ ກໍຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍຂອງແຮ່ທາດ, ແຮ່ເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ຕາມລາຄາທ້ອງຕະຫຼາດ.

**ມາດຕາ 98 (ປັບປຸງ). ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ກ່ຽວກັບວຽກງານແຮ່ທາດ ກໍຕ້ອງໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 99. ມາດຕະການທາງອາຍາ**

ບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ທີ່ເປັນການກະທຳຜິດທາງອາຍາ ເຊັ່ນ ການປອມແປງໃບອະນຸຍາດດຳເນີນກິດຈະການກ່ຽວກັບແຮ່ທາດ, ການທຳລາຍແຫຼ່ງແຮ່, ການລັກລອບຂຸດຄົ້ນແຮ່ທາດ, ການບໍ່ປະຕິບັດມາດຕະການຮັບປະກັນຄວາມປອດໄພ ແລະ ສິ່ງແວດລ້ອມ ຊຶ່ງພາໃຫ້ມີການບາດເຈັບສາຫັດ ຫຼື ເສຍຊີວິດ, ຮັບສິນບົນ, ໃຊ້ອຳນາດເກີນຂອບເຂດ, ປອມແປງເອກະສານຕ່າງໆ ກ່ຽວກັບແຮ່ທາດ, ສວຍໃຊ້ໜ້າທີ່ ເພື່ອຫາຜົນປະໂຫຍດສ່ວນຕົວຈາກການດຳເນີນກິດຈະການກ່ຽວກັບແຮ່ທາດ ກໍຈະຖືກລົງໂທດຕາມກົດໝາຍອາຍາ ພ້ອມທັງໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 100. ມາດຕະການໂທດເພີ່ມ**

ນອກຈາກທີ່ໄດ້ກຳນົດໄວ້ໃນມາດຕາ 99 ຂອງກົດໝາຍສະບັບນີ້ແລ້ວ ຜູ້ກະທຳຜິດຍັງຈະຖືກປະຕິບັດມາດຕະການໂທດເພີ່ມ ເຊັ່ນ ການໂຈະການດຳເນີນກິດຈະການກ່ຽວກັບແຮ່ທາດ, ການຖອນໃບອະນຸຍາດ, ການຮິບ ຊັບ, ພາຫະນະ ແລະ ອຸປະກອນທີ່ພົວພັນກັບການກະທຳຜິດ ເປັນຂອງລັດ.

## ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 101. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍ ສະບັບນີ້.

**ມາດຕາ 102 (ປັບປຸງ). ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ເກົ້າສິບ ວັນ ນັບແຕ່ວັນ ປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍ ແຮ່ທາດ ສະບັບເລກທີ 04/ສພຊ, ລົງວັນທີ 8 ທັນວາ 2008.

ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮັບອະນຸຍາດດຳເນີນກິດຈະການ ກ່ຽວກັບແຮ່ທາດ ຕາມສັນຍາທີ່ມີຜົນສັກສິດມາກ່ອນ ກໍສາມາດດຳເນີນກິດຈະການກ່ຽວກັບແຮ່ທາດນັ້ນຕໍ່ໄປ ຕາມເງື່ອນໄຂ ແລະ ເນື້ອໃນຂອງສັນຍາທີ່ກ່ຽວຂ້ອງ.

ໃນກໍລະນີທີ່ຜູ້ໄດ້ຮັບອະນຸຍາດດຳເນີນກິດຈະການກ່ຽວກັບແຮ່ທາດ ຕາມສັນຍາໃນເມື່ອກ່ອນຫາກມີຈຸດປະສົງປະຕິບັດຕາມກົດໝາຍສະບັບປັບປຸງນີ້ ກໍໃຫ້ສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ພາຍໃນກຳນົດເວລາ ໜຶ່ງຮ້ອຍຊາວ ວັນ ນັບແຕ່ວັນກົດໝາຍສະບັບນີ້ ມີຜົນສັກສິດເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້